# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

09-15 ທັນວາ 2024

ປີທີ 13

ສະບັບທີ 997

ລາຍສັປະດາ


## ທວນຄືນມູນເຊື້ອຂອງສະພາແຫ່ງຊາດລາວ ຄົບຮອບ 49 ປີ

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນເຊົ້າວັນທີ 29 ພະຈິກ 2024 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ກ່າວຄຳເຫັນຕໍ່ທີ່ປະຊຸມ ໃນໂອກາດວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 49 ປີ (02/12/1975-02/12/2024) ໂດຍທ່ານໄດ້ກ່າວວ່າ:

ເນື່ອງໃນໂອກາດວັນທີ 2 ທັນວາ 2024 ທີ່ຈະໝູນວຽນມາເຖິງໃນ 3 ວັນຂ້າງໜ້ານີ້ ເຊິ່ງເປັນວັນປະຫວັດສາດອັນຍິ່ງໃຫຍ່ຂອງຊາດ ວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ວັນສ້າງຕັ້ງສະພາແແຫ່ງຊາດແຫ່ງລາວ ຄົບຮອບ 49 ປີ (2/12/1975-2/12/2024), ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ສົ່ງຄວາມອວຍພອນອັນປະເສີດມາຍັງບັນດາທ່ານການນຳຂອງສະພາແຫ່ງຊາດ, ອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ພ້ອມດ້ວຍສະມາຊິກສະພາແຫ່ງຊາດ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກແລະມີຜົນສຳເລັດ.

ວັນຊາດ ແລະ ວັນສ້າງ

ອ່ານຕໍ່ໜ້າ 7






## ຄວາມຄືບໜ້າການປັບປຸງລັດຖະທຳມະນູນ



(ສພຊ) - ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ວັນທີ 29 ພະຈິກ 2024, ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ແກ່ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແຫ່ງ ສປປລາວ ສະບັບປີ 2015 (ຄລຊ) ໄດ້ລາຍງານຄວາມຄືບໜ້າໃນການປັບປຸງລັດຖະທຳມະນູນ ເຊິ່ງທ່ານໃຫ້ຮູ້ວ່ານັບແຕ່ມື້ຄລຊ ໄດ້ລາຍງານການກະກຽມວຽກງານຮອບດ້ານໃນການປັບປຸງລັດຖະທຳມະນູນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງ ສພຊ ຊຸດທີ IX ໃນວັນທີ 17 ມິຖຸນາ 2024 ເປັນຕົ້ນມາ, ຄະນະກຳມະການ

ອ່ານຕໍ່ໜ້າ 9

## ຮອງປະທານສະພາແຫ່ງຊາດ ຕ້ອນຮັບສະມາຄົມມິດຕະພາບ ກູບາ-ລາວ



ອ່ານຕໍ່ໜ້າ 5

## ຄະນະຜູ້ແທນລາວ ສຳເລັດການເຂົ້າຮ່ວມກອງປະຊຸມລັດຖະສະພາສາກົນເພື່ອສັນຕິພາບ ແລະ ຄວາມອົດກັ້ນ



(ສພຊ) - ວັນທີ 23-26 ພະຈິກ 2024 ທ່ານ ຄຳໃບ ດຳລັດຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຂົ້າຮ່ວມກອງປະຊຸມລັດຖະສະພາສາກົນເພື່ອສັນຕິພາບ ແລະ ຄວາມອົດກັ້ນ ຄັ້ງທີ 11 ທີ່ລາຊະອານາຈັກກຳປູເຈຍ ພາຍໃຕ້ຫົວຂໍ້ "ການສະແຫວງຫາສັນຕິພາບ, ການປອງດອງກັນ ແລະ ຄວາມອົດກັ້ນ" ເຊິ່ງມີຄະນະຜູ້ແທນຈາກ 53 ປະເທດທີ່ເປັນສະມາຊິກອົງການດັ່ງກ່າວ, ບັນດາປະເທດສັງເກດການ ແລະແຂກທີ່ຖືກເຊີນເຂົ້າຮ່ວມທັງໝົດ 300 ທ່ານ ໃນນີ້, ມີລະດັບປະທານສະພາແຫ່ງຊາດ 6 ປະເທດ ແລະ ຮອງປະທານສະພາແຫ່ງຊາດ 6 ປະເທດ.

ທ່ານຮອງປະທານສະພາແຫ່ງຊາດລາວ ໃນນາມຫົວໜ້າຄະນະຜູ້ແທນ ໄດ້ຂຶ້ນກ່າວປາໄສໃນຫົວຂໍ້ "ການເສີມສ້າງລະບົບພະຫຸພາຄີ, ການຮ່ວມມື, ການເປັນຄູ່ຮ່ວມເພື່ອການຢູ່ຮ່ວມກັນ ແລະການເຊື່ອມຈອດແບບກວມລວມ" ເຊິ່ງທ່ານໄດ້ຕີລາສູງຕໍ່ບົດບາດແລະຄວາມພະຍາຍາມຂອງບັນດາທ່ານສະມາຊິກລັດຖະສະພາໃນໄລຍະຜ່ານມາ ທີ່ໄດ້ມີການປຶກສາຫາລື, ແລກປ່ຽນທັດສະນະແລະ ມີການປະສານສົມທົບກັນ ຊອກຫາວິທີທາງໃນການ

ອ່ານຕໍ່ໜ້າ 5

## ຊຸກຍູ້ສ້າງບ້ານເປັນຫົວໜ່ວຍພັດທະນາ ໃຫ້ໄດ້ 1,086 ບ້ານ ໃນປີ 2025



(ສພຊ) - ຕອນເຊົ້າວັນທີ 27 ພະຈິກຜ່ານມາ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິຂອງສະພາແຫ່ງຊາດສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016 ວ່າດ້ວຍການຈັດຕັ້ງປະຕິບັດວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ

ອ່ານຕໍ່ໜ້າ 10



ຄິດຮອດ ສ.ອ.ຈ (ໜ້າ 9)



UAE ອອກກົດໝາຍ... (ໜ້າ 11)




ໂທດຂອງການໃຊ້... (ໜ້າ 12)

# ພົທ. ຄຳລຽງ ອຸທະໄກສອນ ຂຶ້ນເປັນ ລັດຖະມົນຕີກະຊວງປ້ອງກັນປະເທດ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນວາລະຕອນບ່າຍວັນທີ 27 ພະຈິກນີ້ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານປະທານສະພາແຫ່ງຊາດ; ທ່ານປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ໄດ້ຜ່ານມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາການຍົກຍ້າຍ ແລະ ແຕ່ງຕັ້ງສະມາຊິກລັດຖະບານ ເຊິ່ງໄດ້ຍົກຍ້າຍທ່ານ ພົອ. ຈັນສະໝອນ ຈັນຍະລາດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ໄປປະຈຳຢູ່ສຳນັກງານນາຍົກລັດຖະມົນຕີໃນຖານະຮອງນາຍົກລັດຖະມົນຕີ ເພື່ອຮັບຜິດຊອບວຽກງານຂອງລັດຖະບານ; ແຕ່ງຕັ້ງທ່ານ ພົທ. ຄຳລຽງ ອຸທະໄກສອນ ຮອງລັດຖະມົນຕີກະຊວງປ້ອງກັນປະເທດເປັນລັດຖະມົນຕີກະຊວງປ້ອງກັນປະເທດ.

# ບາງບັນຫາທີ່ ສພຊ ຄວນຍົກສູງ ຄຸນນະພາບການຕິດຕາມກວດກາ ແລະ ແກ້ໄຂ



(ສພຊ) - ຕອນເຊົ້າວັນທີ 29 ພະຈິກຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຮັບຟັງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025 ຂອງສະພາແຫ່ງຊາດ ຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ຈາກນັ້ນ, ທ່ານ ຄຳໄຫຼ ສີປະເສີດ ຮອງປະທານສູນກາງແນວລາວສ້າງຊາດ ຕາງໜ້າຄະນະປະຈຳສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ໄດ້ປະກອບຄຳເຫັນຕໍ່ບົດລາຍງານດັ່ງກ່າວ ໂດຍມີບາງຂໍ້ສະເໜີສະພາແຫ່ງຊາດເອົາໃຈໃສ່ຍົກສູງຄຸນນະພາບການຕິດຕາມກວດກາ ແລະ ແກ້ໄຂບາງບັນຫາດັ່ງນີ້: 1. ຕໍ່ປະເດັນການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ-ເງິນຕາ, ສະເໜີເພີ່ມທະວີຄວາມເຂັ້ມງວດແລະນຳໃຊ້ເຄື່ອງມືທັນສະໄໝ ໃນການຈັດເກັບລາຍຮັບ-ຄຸ້ມຄອງລາຍຈ່າຍໃຫ້ມີບາດກ້າວດີຂຶ້ນ; 2. ຕິດຕາມກວດກາວຽກງານການສຶກສາຂອງພາກລັດ ແລະ ເອກະຊົນໄປຕາມທິດຫັນສູ່ດ້ານຄຸນນະພາບການຮຽນ-ການສອນ ແລະ ການເຝິກອົບຮົມຄູທາງດ້ານວິຊາການ ແລະ ດ້ານການເມືອງ, ຍູ້ແຮງວຽກງານຊ່ວຍໜູນ, ນະໂຍບາຍຕໍ່ຖັນແຖວຄູອາຈານໃນເວລາທີ່ຫຍຸ້ງຍາກໃຫ້ດີກວ່າເກົ່າ; 3. ຕິດຕາມກວດກາໃຫ້ເຂັ້ມແຂງຕື່ມຕໍ່ການຍົກສູງຄຸນນະພາບການບໍລິການສາທາລະນະສຸກ ຕິດພັນກັບຈັນຍາບັນ, ຈັນຍາທຳ ແລະ ນ້ຳໃຈຮັບໃຊ້ປະຊາຊົນຂອງແພດໝໍ, ຮັບປະກັນການປິ່ນປົວບໍ່ພຽງແຕ່ປະຊາຊົນລາວ ຫາກຍັງຕ້ອງຮອງຮັບນັກທ່ອງທ່ຽວຕ່າງປະເທດຕື່ມ.

ກ່ຽວກັບຄຳສະເໜີແລະສຽງສະທ້ອນສັງຄົມຕໍ່ສະພາແຫ່ງຊາດ ແລະ ສະມາຊິກສະພາແຫ່ງຊາດ ເຊິ່ງຜ່ານການລົງພົບປະເກັບກຳຄຳເຫັນ, ຄຳສະເໜີຂອງປະຊາຊົນຢູ່ທ້ອງຖິ່ນຮາກຖານໃນຂອບເຂດທົ່ວປະເທດ ຈຶ່ງໄດ້ນຳເອົາຂໍ້ສະເໜີມາລາຍງານຕໍ່ກອງປະຊຸມດັ່ງນີ້: 1. ຕິດຕາມກວດກາ, ແກ້ໄຂ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງຄຸ້ມຄອງສື່ສັງຄົມອອນລາຍໃນການໂຄສະນາສິນຄ້າເກີນຄວາມເປັນຈິງ ເຮັດໃຫ້ຜູ້ບໍລິໂພກອັບປະໂຫຍດ, ກຸ່ມແກ໊ງຕົວະຍົວະຫຼອກລວງຜ່ານອິນເຕີເນັດເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ; 2. ເຂັ້ມງວດໃນການຄຸ້ມຄອງລົດຂົນສົ່ງ, ລົດບັນທຸກໜັກ ແລະ ລົດບຸກຄົນຂອງຕ່າງປະເທດ ທີ່ເຂົ້າມາເຄື່ອນໄຫວໃນ ສປປລາວ; 3. ຕິດຕາມກວດກາ, ແກ້ໄຂ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງໃນການປະຕິບັດກົດໝາຍວ່າດ້ວຍຄອບຄົວ ກ່ຽວກັບການແຕ່ງງານທີ່ບໍ່ຖືກຕ້ອງ, ມີປາກົດການຕົວະຍົວະຫຼອກລວງ ແລະ ແອບແຝງການຄ້າມະນຸດ; 4. ຕິດຕາມກວດກາ, ແກ້ໄຂ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງ ຕໍ່ການພິຈາລະນາພິພາກສາ, ການຕັດສິນຄະດີຂອງສານປະຊາຊົນແຕ່ລະຂັ້ນ ມີບາງກໍລະນີບໍ່ມີຄວາມຍຸຕິທຳ, ບໍ່ມີຄວາມໂປ່ງໃສ່, ບໍ່ມີຈັນຍາບັນ ແລະ ຈັນຍາທຳ ເຮັດໃຫ້ປະຊາຊົນຂາດຄວາມເຊື່ອໝັ້ນຕໍ່ຂະບວນການຍຸຕິທຳຂອງລັດ; 5. ຕິດຕາມກວດກາ, ແກ້ໄຂງົບປະມານທີ່ລັດຖະບານວາງໃຫ້ໄປຊຸກຍູ້ສົ່ງເສີມການຜະລິດທຸລະກິດຂະໜາດກາງ, ຂະໜາດນ້ອຍ ແລະ ຈຸນລະວິສາຫະກິດ; 6. ຕິດຕາມກວດກາ, ແກ້ໄຂ ແລະ ຊຸກຍູ້ຂະແໜງການກ່ຽວຂ້ອງ ປັບປຸງລະບົບຫມໍ້ສົ່ງໄຟຟ້າໃຫ້ສະຖຽນ ແລະ ໂຄງສ້າງລາຄາໄຟຟ້າໃນຂົງເຂດກະສິກຳ, ອຸດສາຫະກຳແລະຫັດຖະກຳ.

ພ້ອມກັນນັ້ນ, ກໍສະເໜີແລກປ່ຽນດັ່ງນີ້: 1. ສະເໜີຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX ສະບັບເລກທີ 110/ສພຊ, ລົງວັນທີ 21/11/2023 ເພື່ອສູ້ຊົນສ້າງບ້ານປອດຢາເສບຕິດ ໃຫ້ໄດ້ 80% ຂອງ

ອ່ານຕໍ່ໜ້າ 11

# ກອງປະຊຸມຄົບຄະນະ ກຕທ ປະຈຳປີ 2024



(ສພຊ) - ກອງປະຊຸມຄົບຄະນະຂອງກຳມາທິການການຕ່າງປະເທດ (ກຕທ) ປະຈຳປີ 2024 ໄດ້ຈັດຂຶ້ນໃນວັນເສົາທີ 30 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ (ສພຊ) ໂດຍການເປັນປະທານຂອງທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການການຕ່າງປະເທດ, ໂດຍມີການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ບັນດາທ່ານປະທານແລະຮອງປະທານກຳມາທິການ ສພຊ, ທ່ານລັດຖະມົນຕີກະຊວງການຕ່າງປະເທດ, ຮອງລັດຖະມົນຕີກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງແຜນການ ແລະ ການລົງທຶນ, ບັນດາທ່ານສະມາຊິກສະພາແຫ່ງຊາດທີ່ເປັນກຳມະການຂອງ ກຕທ, ບັນດາທ່ານປະທານແລະຮອງປະທານຄະນະກຳມະການຮ່ວມມືລາວ-ຫວຽດນາມ, ລາວ-ຈີນ, ຜູ້ຕາງໜ້າຂອງກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ພ້ອມດ້ວຍພະນັກງານຈາກພາກສ່ວນທີ່ກ່ຽວຂ້ອງແລະແຂກຖືກເຊີນຈຳນວນໜຶ່ງ; ນອກນັ້ນ, ຍັງມີບັນດາສະຖານເອກອັກຄະລັດຖະທູດແລະຜູ້ຕາງໜ້າຖາວອນສປປລາວປະຈຳປະເທດຕ່າງໆ ເຂົ້າຮ່ວມທາງອອນລາຍ ຈຳນວນ 28 ອົງການ.

ທ່ານ ສັນຍາ ປຣະເສີດ ໄດ້ແຈ້ງໃຫ້ຊາບວ່າ: ກອງປະຊຸມຄັ້ງນີ້ຈະໄດ້ຮັບຟັງບົດສະຫຼຸບການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025; ລາຍງານຜົນສຳເລັດຂອງການເປັນປະທານແລະເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45; ລາຍງານຜົນການຕິດຕາມ, ກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍໃນຂົງເຂດວຽກງານການຕ່າງປະເທດ ຢູ່ 3 ແຂວງ (ອຸດົມໄຊ, ຫຼວງນ້ຳທາ ແລະ ຜົ້ງສາລີ); ລາຍງານສະພາບການຄຸ້ມຄອງການຊ່ວຍເຫຼືອລ້າເພື່ອການພັດທະນາໃນ ສປປລາວ ປະຈຳປີ 2024 ແລະ ແຜນການການປະຈຳປີ 2025; ລາຍງານສະພາບການພົ້ນເດັ່ນຂອງການຮ່ວມມືລາວ-ຫວຽດນາມ, ລາວ-ຈີນ, ລາວ-ກຳປູເຈຍ ປະຈຳປີ 2024 ແລະ ແຜນການຮ່ວມມືປະຈຳປີ 2025; ລາຍງານການພົວພັນຮ່ວມມືລະຫວ່າງສປປລາວກັບປະເທດ ສະວິດ, ແບນຊິກ, ໂອຕຣິດ, ອິນໂດເນເຊຍ; ລາຍງານການເຄື່ອນໄຫວວຽກງານການຕ່າງປະເທດຂອງລັດຖະບານ ປະຈຳປີ 2024; ລາຍງານຜົນສຳເລັດຂອງການເປັນປະທານອາຊຽນ ແລະ ເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45; ການຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ ແລະ ຂໍ້ຕົກລົງທີ່ລັດຖະບານລາວໄດ້ເຊັນກັບຕ່າງປະເທດ; ວຽກງານຊາຍແດນ, ວຽກງານກົງສູນ, ວຽກງານສິດທິມະນຸດແລະທິດທາງແຜນການປະຈຳປີ 2025; ລາຍງານການປົກປັກຮັກສາອາຄານດ່ານສາກົນ, ການກໍ່ສ້າງຕາຝັ່ງເຈື່ອນຕາມລຳນ້ຳຂອງ, ນ້ຳເຫືອງ ແລະ ອື່ນໆ.

ບັນດາທ່ານຜູ້ແທນກອງປະຊຸມ ໄດ້ຍົກສູງຄວາມຮັບຜິດຊອບດ້ານການເມືອງ, ສຸມທຸກສະຕິປັນຍາ, ຄວາມຮູ້ຄວາມສາມາດ ແລະ ປະສົບການ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳຄິດຄຳເຫັນໃສ່ການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດຢ່າງມີຈຸດສຸມ ພ້ອມທັງໄດ້ມີຂໍ້ສະເໜີເພື່ອປັບປຸງແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານການຕ່າງປະເທດຂອງສະພາແຫ່ງຊາດ ມີຄຸນນະພາບ ແລະ ປະສິດທິພາບສູງ.

ໂອກາດນີ້, ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມ ໂດຍໄດ້ສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນງານແລະຜົນສຳເລັດຕ່າງໆໃນການເຄື່ອນໄຫວວຽກງານຂອງກຳມາທິການການຕ່າງປະເທດ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ; ພິເສດແມ່ນຜົນສຳເລັດທີ່ຈົບງາມໃນການເປັນປະທານກອງປະຊຸມສຸດຍອດອາຊຽນ ຄັ້ງທີ 44 ແລະ 45, ກອງປະຊຸມໄອປາຄັ້ງທີ 45 ກໍຄືການຈັດຕັ້ງປະຕິບັດພາລະບົດບາດຂອງອົງການນິຕິບັນຍັດ ທີ່ຕິດພັນກັບການຈັດຕັ້ງຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ ແລະ ລັດຖະບານ, ກົດໝາຍຂອງລັດ ກໍຄືພັນທະສາກົນ; ສະແດງຄວາມຊົມເຊີຍຕໍ່ການເຄື່ອນໄຫວຢ່າງຫ້າວຫັນຂອງກະຊວງການຕ່າງປະເທດ, ບັນດາສະຖານທູດລາວຢູ່ຕ່າງປະເທດ ອັນໄດ້ເຮັດໃຫ້ປະເທດຕ່າງໆມີຄວາມເຂົ້າໃຈເຖິງຄວາມເປັນຈິງຢູ່ ສປປລາວ ຫຼາຍຂຶ້ນ, ອັນພົ້ນເດັ່ນແມ່ນການມີສ່ວນຮ່ວມລະດົມພີ່ນ້ອງຊາວລາວຢູ່ຕ່າງປະເທດມາເຂົ້າຮ່ວມກອງປະຊຸມຄັ້ງທຳອິດພາຍໃຕ້ຫົວຂໍ້"ຮັກບ້ານເກີດ" ທີ່ຫາກໍສຳເລັດຢ່າງຈົບງາມ.

ທ່ານຮອງປະທານສະພາແຫ່ງຊາດ ຍັງໄດ້ເນັ້ນໜັກບາງບັນຫາໃຫ້ກຳມາທິການການຕ່າງປະເທດເອົາໃຈໃສ່ຄື: ສຶກສາອົບຮົມແນວຄິດການເມືອງໃຫ້ພະນັກງານມີຄວາມໜັກແໜ້ນດ້ານຫຼັກໝັ້ນທັດສະນະດ້ານການເມືອງ; ຜັນຂະຫຍາຍແນວທາງການຕ່າງປະເທດຂອງພັກ, ລະບຽບກົດໝາຍຂອງລັດ, ປະຕິບັດກົນໄກລາຍງານ ແລະ ຂໍທິດຊີ້ນຳຢ່າງເປັນປະຈຳຈາກກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ແລະ ຄະນະປະຈຳສະພາແຫ່ງຊາດ ໃນການເຄື່ອນໄຫວຕ່າງປະເທດທີ່ສຳຄັນ; ຕິດຕາມກວດກາການຈັດຕັ້ງປະຕິບັດຂໍ້ຕົກລົງ, ສັນຍາ ແລະ ສົນທິສັນຍາ ລະຫວ່າງ ສປປລາວກັບຕ່າງ ປະເທດ ກ່ຽວກັບການຄ້າ, ການລົງທຶນຂອງຕ່າງປະເທດດ້ວຍການປະສານກັບພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ, ທ້ອງຖິ່ນ ໃນການປະຕິບັດພາລະບົດບາດຕິດຕາມກວດກາຢູ່ບັນດາເຂດເລືອກຕັ້ງ ເພື່ອຊອກຫາວິທີແກ້ໄຂບັນຫາທີ່ຫຍຸ້ງຍາກ, ອຸດຕັນ ໃນການຮ່ວມມືດ້ານການລົງທຶນ ແລະ ຕິດຕາມກວດກາ

ອ່ານຕໍ່ໜ້າ 4

# ພົທ. ສຸວອນ ເລືອງບຸນມີ ຮັບການຢ້ຽມຂໍ່ານັບຂອງ ຄະນະຕິດຕໍ່ມູນເຊື້ອມິດຕະພາບ ຫວຽດນາມ-ລາວ



(ສພຊ) - ຕອນສວາຍ ວັນທີ 29 ພະຈິກຜ່ານມາ ທີ່ສະພາແຫ່ງຊາດ, ສະຫາຍ ພົທ. ສຸວອນ ເລືອງບຸນມີ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຂອງສະຫາຍ ພົຕ. ຫງວຽນ ຕຽນ ລອງ ອະດີດຫົວໜ້າການເມືອງທະຫານເຂດ 3, ຮອງປະທານຜູ້ປະຈຳການສູນກາງສະມາຄົມມິດຕະພາບຫວຽດນາມ-ລາວ, ຮອງຫົວໜ້າຄະນະຕິດຕໍ່ມູນເຊື້ອມິດຕະພາບຫວຽດນາມ-ລາວ ພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ ແລະ ເຮັດວຽກຢູ່ສປປລາວລະຫວ່າງວັນທີ 26-30 ພະຈິກນີ້.

ສະຫາຍ ພົທ. ສຸວອນ ເລືອງບຸນມີ ໄດ້ສະແດງຄວາມຍິນດີຕ້ອນຮັບ ພ້ອມທັງຕີລາຄາສູງຕໍ່ການພົບປະຄັ້ງນີ້ເປັນການປະກອບສ່ວນສຳຄັນເຂົ້າໃນການຮັດແໜ້ນແລະເພີ່ມພູນຄູນສ້າງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະການຮ່ວມມືຮອບດ້ານລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດລາວ-ຫວຽດນາມ ເວົ້າລວມ, ເວົ້າສະເພາະລະຫວ່າງສອງສະມາຄົມມິດຕະພາບ ແລະສອງກອງທັບລາວ-ຫວຽດນາມ, ຫວຽດນາມ-ລາວ ໃຫ້ນັບມື້ເຂົ້າສູ່ລວງເລິກ ແລະ ແຕກດອກອອກຜົນຍິ່ງໆຂຶ້ນ; ພ້ອມກັນນັ້ນ, ກໍໄດ້ແຈ້ງໃຫ້ຊາບໂດຍຫຍໍ້ການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມ, ສະພາບການພົ້ນເດັ່ນ ແລະການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດລາວ ຊຸດທີ IX.

ສະຫາຍ ພົຕ. ຫງວຽນ ຕຽນ ລອງ ໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງໃຫ້ຊາບຈຸດປະສົງການມາຢ້ຽມຢາມແລະເຮັດວຽກຢູ່ ສປປລາວ ຄັ້ງນີ້, ລາຍງານໂດຍຫຍໍ້ການປະຕິບັດພາລະບົດບາດຂອງຄະນະຕິດຕໍ່ມູນເຊື້ອມິດຕະພາບ ຫວຽດນາມ-ລາວ; ພ້ອມທັງຕີລາຄາສູງຕໍ່ສາຍພົວພັນມິດຕະພາບແບບພິເສດທີ່ຫາຍາກໃນໂລກລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ຫວຽດນາມ-ລາວ.

**(ນາງ ອາລິນ ສຸພົມມະປະດິດ)**

# ຜູ້ປະກອບການ ແລະ ນັກລົງທຶນ ຈະສາມາດເຂົ້າເຖິງຂໍ້ມູນທີ່ດິນກະສິກຳຜ່ານລະບົບເອເລັກໂຕຣນິກ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນເຊົ້າວັນທີ 25 ພະຈິກນີ້ ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ; ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ລາຍງານກ່ຽວກັບ (ຮ່າງ) ວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030 ໂດຍຍົກໃຫ້ເຫັນເຫດຜົນ ແລະ ຄວາມຈຳເປັນໃນການສ້າງຮ່າງດັ່ງກ່າວ ຄື: 1. ຍັງຂາດນິຕິກຳສະເພາະໃນການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳລະດັບມະຫາພາກທີ່ເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວວຽກງານ ນັບແຕ່ສູນກາງຮອດທ້ອງຖິ່ນ; 2. ການແບ່ງຄວາມຮັບຜິດຊອບຕໍ່ວຽກງານການຄຸ້ມຄອງທີ່ດິນກະສິກຳ ລະຫວ່າງກະຊວງກະສິກຳ ແລະ ປ່າໄມ້ ກັບກະຊວງອື່ນທີ່ກ່ຽວຂ້ອງຍັງບໍ່ຂາດຕົວ, ບໍ່ທົ່ວເຖິງ ເຮັດໃຫ້ມີຊ່ອງວ່າງໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ບໍ່ມີປະສິດທິພາບເທົ່າທີ່ຄວນ; 3. ການລົງທຶນໃສ່ຂອງລັດຖະບານ ລວມທັງການຍາດແຍ່ງທຶນ ແລະການຊ່ວຍເຫຼືອຈາກພາຍນອກ ມາຈັດຕັ້ງປະຕິບັດວຽກງານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳຍັງບໍ່ທັນພຽງພໍ, ມີຂໍ້ຈຳກັດ ສ່ວນໃຫຍ່ເປັນພຽງການປະກອບສ່ວນເທົ່ານັ້ນ, ພະນັກງານວິຊາການທີ່ມີຄວາມຮູ້ສະເພາະດ້ານຍັງມີໜ້ອຍ ແລະ ມີຈຳນວນຈຳກັດ; 4. ຂາດງົບປະມານນຳໃຊ້ເຂົ້າໃນວຽກງານທີ່ຈຳເປັນຕໍ່ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ເປັນຕົ້ນວຽກສຳຫຼວດກຳນົດແບ່ງເຂດປະເພດດິນກະສິກຳໃນລະດັບລະອຽດ(ເມືອງແລະບ້ານ), ການສ້າງນິຕິກຳ, ການລົງຕິດຕາມກວດກາການນຳໃຊ້ທີ່ດິນກະສິກຳ, ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານວິຊາການ ແລະ ຊາວກະສິກອນ.

ທ່ານ ຣສ. ປອ. ລິນຄຳ ດວງສະຫວັນ ລາຍງານໃຫ້ຮູ້ອີກວ່າ ພາຍຫຼັງ (ຮ່າງ) ວິໄສທັດຮອດປີ2040ແລະຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030

ອ່ານຕໍ່ໜ້າ 8

# ບາງຂໍ້ສະເໜີໃຫ້ອົງການກວດກາ ແລະ ອົງການກວດສອບ ເອົາໃຈໃສ່ຕື່ມ



(ສພຊ) - ຕອນເຊົ້າວັນທີ 27 ພະຈິກຜ່ານມາ, ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໂດຍການເປັນປະທານຂອງທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຮັບຟັງບົດລາຍງານຂອງອົງການກວດກາແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານການກວດກາຕາມຜົນການກວດສອບປີ 2022 ຈາກທ່ານ ຄຳພັນ ພົມມະທັດ ປະທານອົງການກວດກາແຫ່ງລັດ; ບົດລາຍງານຂອງອົງການກວດສອບແຫ່ງລັດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດງົບປະມານແຫ່ງລັດປະຈຳປີ 2023 ຈາກທ່ານ ວຽງທະວີສອນ ເທບພະຈັນ ປະທານອົງການກວດສອບແຫ່ງລັດ; ຈາກນັ້ນ, ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ສອງບົດລາຍ ງານດັ່ງກ່າວ ໂດຍມີບາງຂໍ້ສະເໜີໃຫ້ເອົາໃຈໃສ່ຕື່ມດັ່ງນີ້:

**ຕໍ່ອົງການກວດກາແຫ່ງລັດ**

1.ສືບຕໍ່ແກ້ໄຂຂໍ້ຄົງຄ້າງຂອງວຽກອົງການກວດກາແຫ່ງລັດໃນປີຜ່ານມາ ໃຫ້ມີຄວາມຄືບໜ້າຫຼາຍຂຶ້ນ;

2. ເອົາໃຈໃສ່ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການກວດກາລັດເປັນຕົ້ນມາດຕາ28ການພິຈາລະນາຜົນການກວດກາ, ມາດຕາ 29 ການແກ້ໄຂຜົນການກວດກາ ແລະ ມາດຕາ 30 ການຕິດຕາມ, ຊຸກຍູ້, ກວດກາການແກ້ໄຂຜົນການກວດກາໃຫ້ເຂັ້ມງວດ ແລະ ເປັນຮູບປະທຳຂຶ້ນກວ່າເກົ່າ;

3.ສືບຕໍ່ຊຸກຍູ້ເປົ້າໝາຍຖືກກວດກາ, ອົງການຄຸ້ມຄອງເປົ້າໝາຍຖືກກວດກາ ເປັນເຈົ້າການປະສານສົມທົບ ແລະ ໃຫ້ການຮ່ວມມືກັບອົງການກວດກາແຫ່ງລັດ ໄຈ້ແຍກແລະສັງລວມຜົນການກວດກາ ມາຮອດປັດຈຸບັນມີເທົ່າໃດ, ໄດ້ຮັບການແກ້ໄຂແລ້ວເທົ່າໃດ ແລະ ຍັງຄ້າງເທົ່າໃດ ພ້ອມທັງຈັດລຽງລຳດັບຄວາມສຳຄັນຂອງການແກ້ໄຂຜົນການກວດກາ ເປັນຕົ້ນລະດັບໃດຄວນແມ່ນຄວາມຮັບຜິດຊອບຂອງສະພາແຫ່ງຊາດ, ລະດັບໃດຄວນແມ່ນລັດຖະບານ,ກະຊວງ, ອົງການ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ແກ້ໄຂໄດ້ ແລະ ອັນໃດຄວນແກ້ທັນທີ, ແກ້ໃນໄລຍະສັ້ນ, ກາງ ແລະ ຍາວ ເພື່ອໃຫ້ສະພາແຫ່ງຊາດພິຈາລະນາ;

4. ສືບຕໍ່ເອົາໃຈໃສ່ກໍ່ສ້າງບຳລຸງພະນັກງານຂອງຕົນໃຫ້ມີຄວາມຮູ້, ມີຄວາມຊຳນິຊຳນານ, ມີຄຸນນະພາບ ແລະ ມີຈັນຍາບັນ-ຈັນຍາທຳ ເພື່ອສາມາດຕອບສະໜອງກັບວຽກງານກວດກາໃນສະພາບຕົວຈິງ ແລະ ໃນໄລຍະໃໝ່;

5.ເອົາໃຈໃສ່ພັດທະນາສິ່ງອຳນວຍຄວາມສະດວກ ແລະ ທັນເປັນທັນສະໄໝວຽກງານກວດກາ ໃຫ້ມີຄຸນນະພາບ, ມີປະສິດທິພາບ ແລະປະສິດທິຜົນຫຼາຍຂຶ້ນ.

**ຕໍ່ອົງການກວດສອບແຫ່ງລັດ**

1. ຄົ້ນຄວ້າ ແລະ ຄັດເລືອກເປົ້າໝາຍກວດສອບ ທີ່ຕິດພັນກັບການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2024, ພ້ອມທັງຕິດຕາມການແກ້ໄຂຜົນການກວດສອບໄປຄຽງຄູ່;

2. ຄົ້ນຄວ້າສ້າງ, ປັບປຸງນິຕິກຳ ແລະ ຜັນຂະຫຍາຍບາງມາດຕາຂອງກົດໝາຍ ເປັນຕົ້ນມາດຕາ 67 ຜູ້ຮ່ວມງານການກວດສອບ;

3. ເຂົ້າຮ່ວມແຕ່ຫົວທີໃນການສ້າງແຜນງົບປະມານແຫ່ງລັດແລະແຜນການລົງທຶນຂອງລັດປະຈຳປີ;

4. ຊຸກຍູ້ເປົ້າໝາຍຖືກກວດສອບ, ອົງການຄຸ້ມຄອງເປົ້າໝາຍຖືກກວດສອບ ສືບຕໍ່ເປັນເຈົ້າການປະສານສົມທົບກັບອົງການກວດສອບແຫ່ງລັດ ໄຈ້ແຍກ ແລະ ສັງລວມຜົນການກວດສອບ ມາຮອດປັດຈຸບັນມີຈຳນວນເທົ່າໃດ ແລະ ໄດ້ຮັບການແກ້ໄຂແລ້ວຈຳນວນເທົ່າໃດ, ຍັງຄ້າງຈຳນວນເທົ່າໃດ ພ້ອມທັງຈັດລຽງລຳດັບຄວາມສຳຄັນຂອງການແກ້ໄຂຜົນການກວດສອບ ເປັນຕົ້ນລະດັບໃດຄວນແມ່ນສະພາແຫ່ງຊາດ, ລະດັບໃດຄວນແມ່ນລັດຖະບານ, ກະຊວງ, ອົງການ, ສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ແກ້ໄຂໄດ້ ແລະ ບັນຫາໃດຄວນແກ້ໄຂທັນທີ, ແກ້ໄຂໃນໄລຍະສັ້ນ, ກາງ, ຍາວ ເພື່ອໃຫ້ສະພາແຫ່ງຊາດພິຈາລະນາ;

5. ສືບຕໍ່ຄົ້ນຄວ້າພັດທະນາເຄື່ອງມືຮັບໃຊ້ວຽກງານກວດສອບ ເພື່ອຫັນວຽກງານການກວດສອບແຫ່ງລັດເປັນທັນສະໄໝ ໃຫ້ສາມາດເຊື່ອມໂຍງຂໍ້ມູນກັບເປົ້າໝາຍຖືກກວດສອບແລະແຫຼ່ງຂໍ້ມູນຂອງຂະແໜງການກ່ຽວຂ້ອງ ເພື່ອສາມາດຕິດຕາມກວດກາແຕ່ຫົວທີ ແລະ ເປັນປົກກະຕິ;

6. ເພີ່ມທະວີການສະໜອງຂໍ້ມູນ ແລະ ເອກະສານ ໂດຍສະເພາະບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ ແລະ ເອກະສານອື່ນທີ່ຈຳເປັນ ໃຫ້ສະພາແຫ່ງຊາດ, ຄົ້ນຄວ້າພິຈາລະນາ ແລະ ທັນຕາມໄລຍະເວລາ ຕາມມາດຕາ36ຂອງກົດໝາຍວ່າດ້ວຍການກວດສອບແຫ່ງລັດ;

7. ສືບຕໍ່ເອົາໃຈໃສ່ກໍ່ສ້າງພະນັກງານ ແລະ ນັກກວດສອບ ໃຫ້ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ, ຈັນຍາທຳ ເພື່ອສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງວຽກງານກວດສອບໃຫ້ມີຄຸນນະພາບ ແລະ ທັນເວລາ.

ຕໍ່ກັບຂໍ້ສະເໜີຂອງສອງອົງການ ໃຫ້ສະພາແຫ່ງຊາດພິຈາລະນາງົບປະມານນັ້ນ, ຄະນະປະຈຳສະພາແຫ່ງຊາດ ຈະປະສານສົມທົບກັບລັດຖະບານ ໃຫ້ພິຈາລະນາຕາມຄວາມເໝາະສົມ.

# ບາງຄຳເຫັນຕໍ່ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ



(ສພຊ) - ເພື່ອຮັບປະກັນເຮັດໃຫ້ການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ມີປະສິດທິພາບ ແລະ ປະສິດທິຜົນ; ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ຄັ້ງວັນທີ 25 ພະຈິກນີ້, ທ່ານ ນາງ ປິ່ງຄຳ ລາຊະສິມມາ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ສະເໜີບາງຄຳເຫັນຕໍ່ລັດຖະບານດັ່ງນີ້:

1. ວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຮອດປີ 2030 ຕ້ອງໃຫ້ສອດຄ່ອງກັບຍຸດທະສາດຂອງຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໂຍທາທິການ ແລະ ຂົນສົ່ງ, ພະລັງງານແລະບໍ່ແຮ່, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ລວມທັງວຽກງານປ່າໄມ້ຂອງຂະແໜງກະສິກຳ ແລະ ປ່າໄມ້ເອງ;

2.ເອົາໃຈໃສ່ປົກປັກຮັກສາທີ່ດິນກະສິກຳ ໂດຍສະເພາະເນື້ອທີ່ດິນນາ, ດິນຮັບນ້ຳຊົນລະປະທານທີ່ລັດໄດ້ມີການພັດທະນາແລ້ວ ເພື່ອເປັນປັດໄຈສະໜອງໃຫ້ແກ່ແຜນງານຄ້ຳປະກັນການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ ໂດຍມີມາດຕະການຄຸ້ມຄອງ, ມີການຕິດຕາມກວດກາ, ຈຳກັດການຫັນປ່ຽນທີ່ດິນກະສິກຳໄປເປັນທີ່ດິນປະເພດອື່ນ ເພື່ອຮັບປະກັນບໍ່ໃຫ້ເນື້ອທີ່ກະສິກຳຫຼຸດລົງໃນໄລຍະຍາວ;

3. ສືບຕໍ່ມີກົນໄກຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ໄປຄຽງຄູ່ກັບການຍົກສູງຄຸນນະພາບການຜະລິດກະສິກຳ ໃຫ້ກ້າວໄປສູ່ການຜະລິດທີ່ທັນສະໄໝ ພ້ອມທັງມີການຍົກສູງຄຸນນະພາບທີ່ດິນກະສິກຳ ໃຫ້ຮັບປະກັນຕໍ່ການນຳໃຊ້ ແລະ ການພັດທະນາທີ່ດິນ ຕາມທິດສີຂຽວ ແລະ ຍືນຍົງ;

4. ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດສະບັບນີ້ ສະເໜີໃຫ້ມີກົນໄກປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ ຢ່າງກົມກຽວ ແລະ ເປັນເອກະພາບກັນ, ມີການສະໜອງຂໍ້ມູນຂ່າວສານ, ເຄື່ອງມືອຸປະກອນ ແລະ ການແບ່ງຄວາມຮັບຜິດຊອບຢ່າງຂາດຕົວບົນຫຼັກການການມີສ່ວນຮ່ວມຈາກທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ໄປຕາມທິດ 3 ສ້າງ ເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ, ຮັບປະກັນຄວາມຊັດເຈນທາງດ້ານຕົວເລກເນື້ອທີ່ດິນທີ່ຈະຖືກນຳໃຊ້ໃນແຕ່ລະປະເພດ;

5. ສ້າງ ແລະ ພັດທະນາບຸຄະລາກອນທີ່ຮັບຜິດຊອບວຽກງານການຄຸ້ມຄອງແລະພັດທະນາທີ່ດິນກະສິກຳ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານດັ່ງກ່າວ ພ້ອມທັງເອົາໃຈໃສ່ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ຢ່າງກວ້າງຂວາງ ໃຫ້ທຸກພາກສ່ວນໃນສັງຄົມ, ປະຊາຊົນ ເຂົ້າໃຈ, ເຂົ້າຮ່ວມ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ;

6. ຕໍ່ກັບມາດຕະການດ້ານງົບປະມານແລະແຫຼ່ງທຶນ, ສະເໜີໃຫ້ກະຊວງກ່ຽວຂ້ອງເອົາໃຈໃສ່ຄົ້ນຄວ້ານຳສະເໜີເຂົ້າແຜນງົບປະມານຂອງລັດ ແລະ ຄົ້ນຄວ້າແຫຼ່ງທຶນຕ່າງໆ ເພື່ອໝູນໃຊ້ເຂົ້າໃສ່ບັນດາວຽກງານຢ່າງມີຈຸດສຸມ, ພຽງພໍ ແລະ ຮັບປະກັນໃຫ້ຮ່າງວິໄສທັດ ແລະ ຍຸດທະສາດສະບັບນີ້ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ.




## ກອງປະຊຸມ...

(ຕໍ່ຈາກໜ້າ 2)

ຄວາມຄືບໜ້າຂອງບັນດາໂຄງການລົງທຶນຂອງຕ່າງປະເທດ, ການຄ້າມະນຸດ, ການປັບປຸງດ່ານສາກົນກັບຕ່າງປະເທດ, ບັນດາໂຄງການຕາຝັ່ງເຈື່ອນ, ບັນດາໂຄງການທີ່ມີຜົນກະທົບເຊັ່ນ: ບັນຫາຊາຍແດນ, ການຄຸ້ມຄອງດ່ານຊາຍແດນ, ການເຂົ້າ-ອອກເມືອງ, ແຮງງານຕ່າງດ້າວ, ສິດທິມະນຸດ, ສະພາບການແກ້ໄຂຜູ້ຍົກຍ້າຍຕັ້ງພູມລຳເນົາຕາມລຳພັງໃຈ ແລະ ສ້າງຄອບຄົວບໍ່ຖືກລະບຽບ ຕາມບໍລິເວນຊາຍແດນ ແລະ ບັນຫາອື່ນໆທີ່ກ່ຽວຂ້ອງ; ປັບປຸງກົນໄກປະສານງານ, ລະບອບແບບແຜນວິທີເຮັດວຽກໃຫ້ວ່ອງໄວ, ຄ່ອງຕົວ, ທັນເວລາ, ປະສານກັບກະຊວງການຕ່າງປະເທດ, ບັນດາກະຊວງຕ່າງໆ ແລະ ອົງການທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອສ້າງຄວາມເປັນເອກະພາບໃນການເຄື່ອນໄຫວວຽກງານການຕ່າງປະເທດ. ເສີມຂະຫຍາຍການພົວພັນຮ່ວມມືກັບລັດຖະສະພາປະເທດເພື່ອນມິດຍຸດທະສາດ, ປະເທດເພື່ອນມິດໃນພາກພື້ນ ແລະ ສາກົນ; ສືບຕໍ່ຂຽນປຶ້ມ 50 ປີ ແຫ່ງສາຍພົວພັນລະຫວ່າງສະພາແຫ່ງຊາດແຫ່ງສປປລາວແລະສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃຫ້ສຳເລັດຕາມແຜນການທີ່ໄດ້ກຳນົດໄວ້ ເພື່ອໃຫ້ທັນກັບການສະເຫຼີມສະຫຼອງຄົບຮອບ 50 ປີ ວັນສ້າງຕັ້ງສະພາແຫ່ງຊາດລາວ ໃນປີ 2025.

# ບາງມາດຕະການເພີ່ມຕື່ມເພື່ອຮັບປະກັນ ແຜນການຂອງສານ ແລະ ໄອຍະການ ມີຜົນສຳເລັດ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ8ຂອງສະພາແຫ່ງຊາດຊຸດທີIXໃນຕອນເຊົ້າວັນທີ 28 ພະຈິກນີ້ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ; ຫຼັງຈາກຮັບຟັງການລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປີ 2025 ຈາກທ່ານ ປອ. ນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດແລະທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕາມລຳດັບ, ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການຍຸຕິທຳ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ສອງບົດລາຍງານດັ່ງກ່າວ ໂດຍສະເໜີບາງມາດຕະການເພີ່ມຕື່ມເພື່ອຮັບປະກັນໃຫ້ທິດທາງແຜນການໄດ້ຮັບການຈັດຕັ້ງປະຕິບັດມີຜົນສຳເລັດ ຕາມທີ່ໄດ້ກຳນົດໄວ້ ດັ່ງນີ້:

**ຕໍ່ກັບສານປະຊາຊົນສູງສຸດ**

1. ເພີ່ມທະວີຄວາມຮັບຜິດຊອບນຳພາ-ຊີ້ນຳຂອງສານປະຊາຊົນສູງສຸດ ຕໍ່ສານປະຊາຊົນທ້ອງຖິ່ນແລະສານທະຫານ ໃນການຜັນຂະຫຍາຍທິດທາງແຜນການປີ 2025 ໃຫ້ເປັນແຜນງານ, ໂຄງການລະອຽດ ເພື່ອຈັດຕັ້ງປະຕິບັດ ລວມທັງການສະຫຼຸບລາຍງານໃຫ້ເປັນປົກກະຕິ ແນໃສ່ບັນລຸຄາດໝາຍທີ່ໄດ້ວາງໄວ້;

2. ເອົາໃຈໃສ່ຄົ້ນຄວ້າ ແລະ ປັບປຸງກົງຈັກການຈັດຕັ້ງຂອງສານປະຊາຊົນແຕ່ລະຂັ້ນ ໃຫ້ເປັນລະບົບຄົບຊຸດ, ສຶກສາອົບຮົມການເມືອງ-ແນວຄິດ, ຈັນຍາບັນ, ຈັນຍາທຳ ໃຫ້ແກ່ ຜູ້ພິພາກສາ, ພະນັກງານ-ລັດຖະກອນ ຂອງສານປະຊາຊົນ ຕິດພັນ ກັບການບຳລຸງ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາສະເພາະ, ທັກສະໃນການຄົ້ນຄວ້າຄະດີ ກໍຄືຄວາມເປັນແບບຢ່າງໃນການເຄົາລົບແລະປະຕິບັດກົດໝາຍຢ່າງເຂັ້ມງວດ, ຮັບປະກັນໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສານປະຊາຊົນແຕ່ລະຂັ້ນ ມີປະສິດທິພາບ ແລະ ປະສິດທິຜົນ;

3. ຍົກສູງຄຸນນະພາບໃນການດຳເນີນຄະດີຂອງສານປະຊາຊົນ ເປັນຕົ້ນສານຂັ້ນຕົ້ນ ແລະ ສານຂັ້ນອຸທອນ ໂດຍສຸມໃສ່ຄົ້ນຄວ້າປັບປຸງກົນໄກ, ຮູບການ ແລະ ວິທີການ ໃນການກວດກາຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ມີການລະເມີດກົດໝາຍ, ຄຳຕັດສິນ ຫຼື ຄຳພິພາກສາ ທີ່ມີເນື້ອໃນບໍ່ຈະແຈ້ງ ຫຼື ມີເນື້ອໃນຂັດກັນ ເຊິ່ງເປັນສາເຫດເຮັດໃຫ້ການຈັດຕັ້ງປະຕິບັດຄຳຕັດສິນຂອງສານມີຄວາມຫຍຸ້ງຍາກ ຫຼື ບໍ່ສາມາດຈັດຕັ້ງປະຕິບັດໄດ້ ໃຫ້ມີຜົນສຳເລັດຢ່າງເປັນຮູບປະທຳ;

4. ເອົາໃຈໃສ່ສ້າງ ແລະ ປັບປຸງກົນໄກການປະສານສົມທົບລະຫວ່າງສານປະຊາຊົນກັບພາກສ່ວນທີ່ກ່ຽວຂ້ອງ ໃນການແກ້ໄຂຜົນການຕິດຕາມກວດກາຂອງສະພາແຫ່ງຊາດ ໂດຍສະເພາະການແກ້ໄຂຄຳຮ້ອງທຸກ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ທີ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນທ້ອງຖິ່ນ ເຫັນດີໃຫ້ກວດກາ ແລະ ແກ້ໄຂ ໃຫ້ມີຄວາມເຂັ້ມງວດ ແລະ ເດັດຂາດ ຕາມກົດໝາຍກຳນົດໄວ້.

**ຕໍ່ກັບອົງການໄອຍະການປະຊາຊົນສູງສຸດ**

1. ເອົາໃຈໃສ່ຊີ້ນຳການຜັນຂະຫຍາຍທິດທາງແຜນການປີ 2025 ໃຫ້ເປັນແຜນວຽກລະອຽດ ພ້ອມທັງຊີ້ນຳ ແລະ ຕິດຕາມຊຸກຍູ້ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ ໃນການຈັດຕັ້ງປະຕິບັດໃຫ້ສຳເລັດຕາມຄາດໝາຍທີ່ໄດ້ວາງໄວ້;

2. ເພີ່ມທະວີການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການປັບປຸງກົງຈັກການຈັດຕັ້ງຂອງອົງການໄອຍະການປະຊາຊົນແຕ່ລະຂັ້ນ, ບຳລຸງກໍ່ສ້າງພະນັກງານໄອຍະການປະຊາຊົນ ໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດໜັກແໜ້ນ, ມີຈັນຍາບັນ-ຈັນຍາທຳ, ມີຄວາມຮູ້ຄວາມສາມາດດ້ານວິຊາສະເພາະໃຫ້ເປັນມືອາຊີບ;

3. ຍົກສູງຄຸນນະພາບໃນການຄົ້ນຄວ້າພິຈາລະນາແກ້ໄຂຄະດີ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ສານຕັດສິນເອົາຕາມຄຳຖະແຫຼງຂອງອົງການໄອຍະການປະຊາຊົນ ໃຫ້ບັນລຸຄາດໝາຍ;

4. ສືບຕໍ່ຄົ້ນຄວ້າປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່;

5. ສືບຕໍ່ປັບປຸງກົນໄກ ແລະ ວິທີການໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ ແລະ ການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ໂດຍສຸມໃສ່ແກ້ໄຂບັນຫາການກັກຂັງຜູ້ຖືກຫາ ແລະ ນັກໂທດທີ່ຖືກກັກຂັງເກີນກຳນົດເວລາທີ່ກົດໝາຍກຳນົດໄວ້;

6. ເພີ່ມທະວີການຈັດຕັ້ງປະຕິບັດກົນໄກການປະສານງານຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນ ມີປະສິດທິພາບ, ມີປະສິດທິຜົນແນໃສ່ຍົກສູງຄວາມຮັບຜິດຊອບການເມືອງຕາມພາລະບົດບາດ, ສິດ ແລະ ໜ້າທີ່ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ໃຫ້ນັບມື້ດີຂຶ້ນ.



## ຄະນະຜູ້ແທນ...

(ຕໍ່ຈາກໜ້າ 1)

ສົ່ງເສີມການປົກປັກຮັກສາສັນຕິພາບ, ສ້າງຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນ, ພ້ອມກັນແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໂດຍສັນຕິວິທີຜ່ານກອງປະຊຸມລັດຖະສະພາພາກພື້ນ ແລະ ສາກົນຕ່າງໆເຊັ່ນ: ສະຫະພັນລັດຖະສະພາສາກົນ (IPU), ເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ (APPF), ສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ (APF), ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA) ແລະ ເວທີອື່ນໆ. ພ້ອມກັນນີ້, ຍັງໄດ້ເນັ້ນກ່ຽວກັບການດຳເນີນນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືເພື່ອການພັດທະນາ ຢ່າງສະເໝີຕົ້ນສະເໝີປາຍຂອງ ສປປ ລາວ; ສົ່ງເສີມຄວາມສາມັກຄີເປັນປຶກແຜ່ນລະຫວ່າງບັນດາເຜົ່າ ໃຫ້ມີຄວາມສະເໝີພາບຕໍ່ໜ້າກົດໝາຍ; ຢຶດໝັ້ນຕາມເຈດຕະນາລົມ ແລະ ຄວາມໝາຍໝັ້ນທາງດ້ານການເມືອງທີ່ຈະຮ່ວມມືກັບວົງຄະນາຍາດສາກົນ ໂດຍໄດ້ປະກອບສ່ວນເຂົ້າໃນການສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ສັນຕິພາບ, ການຮ່ວມມື, ການເຊື່ອມໂຍງ-ເຊື່ອມຈອດພາຍໃນພາກພື້ນ; ໄດ້ຮ່ວມມືກັບບັນດາປະເທດເພື່ອນບ້ານໃກ້ຄຽງໃນການພັດທະນາເສດຖະກິດ-ສັງຄົມ ລວມທັງພັດທະນາພື້ນຖານໂຄງລ່າງເພື່ອເຊື່ອມຈອດດ້ານຄົມມະນາຄົມເປັນຕົ້ນແມ່ນເສັ້ນທາງລົດໄຟຄວາມໄວສູງ, ທາງດ່ວນ, ທາງຫຼວງ ແລະ ລະບົບສາຍສົ່ງໄຟຟ້າ ເພື່ອປະກອບສ່ວນອັນສຳຄັນເຮັດໃຫ້ ສປປລາວກາຍເປັນປະເທດເຊື່ອມຈອດ ແລະ ເຊື່ອມໂຍງກັບປະເທດຕ່າງໆໃນພາກພື້ນອາຊຽນ ແລະ ລະຫວ່າງອາຊຽນ ກັບປະເທດອື່ນໆໃນໂລກ.

ທ່ານ ຄຳໃບ ດຳລັດ ຍັງໄດ້ຍົກໃຫ້ເຫັນການປະຕິບັດໜ້າທີ່ແລະບົດບາດຂອງສະພາແຫ່ງຊາດລາວ ໃນການເພີ່ມທະວີການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍ ເຊິ່ງມີການຮັບຮອງເອົາກົດໝາຍຫຼາຍສະບັບທີ່ສອດຄ່ອງກັບຫຼັກການສາກົນ, ສະພາບຄວາມເປັນຈິງຂອງປະເທດ, ມີການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ກໍຄືການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ພ້ອມທັງໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາສາກົນ ເຊິ່ງເປັນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການເສີມສ້າງສັນຕິພາບ, ຄວາມໝັ້ນຄົງ, ສະຖຽນລະພາບ, ການພັດທະນາແບບຍືນຍົງ ແລະ ຄວາມຢູ່ດີກິນດີຂອງປະຊາຊົນ.

ທ່ານຮອງປະທານສະພາແຫ່ງຊາດລາວ ຍັງໄດ້ມີໂອກາດຮ່ວມກັບຫົວໜ້າຄະນະຜູ້ແທນປະເທດຕ່າງໆ ເຂົ້າຢ້ຽມຂໍ່ານັບສົມເດັດ ອັກຄະໂມຫາ ເສນາບໍດີ ເຕໂຈ ຮຸນເຊັນ ປະທານສະພາສູງ, ສົມເດັດມະຫາ ຣັດສະເພຍ ທິກາ ທິພາໄດ ຄູນ ສຸດາຣີ ປະທານສະພາແຫ່ງຊາດ ແລະ ສົມເດັດ ໂມຫາ ໂບຣ ທິພາໄດ ຮຸນ ມາເນດ ນາຍົກລັດຖະມົນຕີແຫ່ງລາຊະອານາຈັກກຳປູເຈຍ ເຊິ່ງການນຳຂັ້ນສູງຂອງປະເທດເຈົ້າພາບ ໄດ້ສະແດງຄວາມຂອບໃຈ ແລະ ຕີລາຄາສູງຕໍ່ຄະນະຜູ້ແທນປະເທດຕ່າງໆທີ່ໄດ້ເຂົ້າຮ່ວມກອງປະຊຸມລັດຖະສະພາສາກົນເພື່ອສັນຕິພາບ ແລະ ຄວາມອົດກັ້ນ ຄັ້ງທີ 11 ນີ້.

ນອກຈາກນັ້ນ, ຄະນະຜູ້ແທນລາວຍັງໄດ້ພົບປະເຮັດວຽກກັບປະທານສະມາຄົມມິດຕະພາບກຳປູເຈຍ-ລາວ ເພື່ອປຶກສາຫາລືກ່ຽວກັບການຊຸກຍູ້ສົ່ງເສີມການພົວພັນຮ່ວມມືລະຫວ່າງສອງສະມາຄົມໃນຕໍ່ໜ້າ; ພ້ອມທັງໄປຢ້ຽມຊົມພິພິທະພັນສານພິເສດໃນຄະດີຂະເໝນແດງ ແລະ ອະນຸສາວະລີວິນວິນທີ່ນະຄອນຫຼວງພະນົມເປັນ.



## ຮອງປະທານ...

(ຕໍ່ຈາກໜ້າ 1)

(ສພຊ) - ຕອນເຊົ້າວັນອາທິດທີ 1 ທັນວານີ້ ທີ່ສະພາແຫ່ງຊາດ, ສະຫາຍ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ປະທານສະມາຄົມມິດຕະພາບ ລາວ-ກູບາ ໄດ້ຕ້ອນຮັບສະຫາຍ ນາງ ວຽງໄຊ ວານເດສ ຣັກສາການປະທານສະມາຄົມມິດຕະພາບກູບາ-ລາວ, ຜູ້ອຳນວຍການຟ້ອນບາເລ່ແຫ່ງຊາດກູບາພ້ອມດ້ວຍຄະນະ ໃນໂອກາດມາຢ້ຽມຢາມ, ເຮັດວຽກ ແລະ ສະແດງສິລະປະຟ້ອນບາເລ່ເພື່ອສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດຂອງ ລາວ-ກູບາ ຄົບຮອບ 50 ປີ (04/11/1974-04/11/2024) ຢູ່ ສປປລາວ ແຕ່ວັນທີ 30 ພະຈິກ - 02 ທັນວາ 2024.

ໃນໂອກາດນີ້, ສະຫາຍ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການຢ້ຽມຢາມຂອງຄະນະຜູ້ແທນສະມາຄົມມິດຕະພາບ ກູບາ-ລາວ ທັງຕີລາຄາສູງຕໍ່ສາຍພົວພັນແລະການຮ່ວມມືອັນເປັນມູນເຊື້ອລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ກູບາ ທີ່ສືບຕໍ່ໄດ້ຮັບການເສີມຂະຫຍາຍແລະເພີ່ມພູນຄູນສ້າງນັບມື້ກ້າວເຂົ້າສູ່ລວງເລິກ ແລະ ນຳເອົາຜົນປະໂຫຍດມາສູ່ປະຊາຊົນສອງປະເທດ; ສະຫາຍ ນາງ ວຽງໄຊ ວານເດສ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ແຈ້ງໃຫ້ຊາບວ່າການຢ້ຽມຢາມ ແລະ ສະແດງສິລະປະໃນຄັ້ງນີ້ຂອງຄະນະຜູ້ແທນກູບານອກຈາກເປັນການສະເຫຼີມສະຫຼອງວັນສ້າງຕັ້ງສາຍພົວພັນການທູດ, ຍັງເປັນການເຄື່ອນໄຫວການທູດປະຊາຊົນ ກໍຄືການແລກປ່ຽນສິລະປະ-ວັດທະນະທຳ ທັງເປັນການປະກອບສ່ວນເສີມຂະຫຍາຍ ແລະ ເພີ່ມພູນຄູນສ້າງສາຍພົວພັນອັນເປັນມູນເຊື້ອ ແລະ ການຮ່ວມມືອັນດີງາມລະຫວ່າງ ສ.ກູບາ ກັບ ສປປລາວ. ພ້ອມນັ້ນ, ສອງຝ່າຍຍັງໄດ້ແຈ້ງສະພາບການອັນພົ້ນເດັ່ນຂອງປະເທດ ກໍຄືການເຄື່ອນໄຫວອັນພົ້ນເດັ່ນຂອງອົງການຕົນ ໃຫ້ກັນຊາບໂດຍຫຍໍ້.

# ຄະນະຜູ້ແທນລາວ ເຂົ້າຮ່ວມກອງປະຊຸມ "ແມ່ຍິງ, ສັນຕິພາບ ແລະ ຄວາມປອດໄພ ຂອງສະມາຊິກລັດຖະສະພາເພດຍິງ"



(ສພຊ) - ທ່ານ ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ, ຮອງປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ພ້ອມດ້ວຍຄະນະທີ່ມີທ່ານ ອຸດົມ ວົງໄກສອນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ, ສະມາຊິກສະພາແຫ່ງຊາດໜຸ່ມ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມສຳມະນາກ່ຽວກັບ "ແມ່ຍິງ, ສັນຕິພາບ ແລະ ຄວາມປອດໄພ ຂອງສະມາຊິກລັດຖະ ສະພາເພດຍິງ: ເຕັກນິກ ແລະ ວິທີການໃນການໄກ່ເກ່ຍ ແລະ ເຈລະຈາຂອງລັດຖະສະພາ" ເຊິ່ງຈັດຂຶ້ນໃນວັນທີ 28-29 ພະຈິກ 2024 ທີ່ນະຄອນຫຼວງພະນົມເປັນ, ລາຊະອານາຈັກກຳປູເຈຍ ໂດຍມີຕົວແທນຈາກບັນດາປະເທດສະມາຊິກລັດຖະສະພາໃນພາກພື້ນອາຊຽນເຂົ້າຮ່ວມ.

ຈຸດປະສົງກອງປະຊຸມຄັ້ງນີ້ ເປັນເວທີແລກປ່ຽນຄຳຄິດຄຳເຫັນ ແລະ ບົດຮຽນກ່ຽວກັບເຕັກນິກການໄກ່ເກ່ຍ, ການເຈລະຈາ ແລະ ປະສົບການລະຫວ່າງຢູ່ພາຍໃນ ແລະ ລັດຖະສະພາ ເພື່ອໃຫ້ບັນລຸກ່ຽວກັບການຕົກລົງເຫັນດີໃນລະຫວ່າງການປະຕິບັດໜ້າທີ່ວຽກງານຂອງລັດຖະສະພາລວມທັງຢູ່ໃນເວທີການທູດຂອງລັດຖະສະພາ; ກອງປະຊຸມສຳມະນາດັ່ງກ່າວ ໄດ້ມີການແລກປ່ຽນວຽກງານແມ່ຍິງ, ສັນຕິພາບ ແລະ ຄວາມປອດໄພ. ພ້ອມດຽວກັນນັ້ນ, ບັນດາປະເທດສະມາຊິກລັດຖະສະພາ ຍັງໄດ້ກຳນົດແຜນວຽກຮ່ວມກັນເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

ທ່ານ ນາງ ວາລີ ເວດສະພົງ ໄດ້ສະແດງຄຳຄິດເຫັນ ແລະ ແລກປ່ຽນບົດຮຽນຕໍ່ກອງປະຊຸມສຳມະນາໃນລັກສະນະສ້າງສັນ ແລະ ກົງໄປກົງມາ.

ກອງປະຊຸມຄັ້ງນີ້ ໄດ້ປິດລົງດ້ວຍຜົນສຳເລັດອັນຈົບງາມ ໂດຍຜູ້ແທນໄດ້ປຶກສາຫາລືສ້າງແຜນວຽກກ່ຽວກັບແມ່ຍິງ, ສັນຕິພາບ ແລະ ຄວາມປອດໄພ ຮ່ວມກັນເພື່ອຈັດ ຕັ້ງປະຕິບັດໃນຕໍ່ໜ້າ.

# ປັບປຸງກົດໝາຍສະຫະພັນແມ່ຍິງລາວ



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ໃນຕອນບ່າຍວັນທີ 3 ທັນວານີ້ ໂດຍການເປັນປະທານຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ, ທ່ານ ນາງ ອາລີ ວົງໜໍ່ບຸນທຳ ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ ໄດ້ສະເໜີຫຍໍ້ຄວາມຈຳເປັນຕໍ່ການປັບປຸງກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ ເຊິ່ງທ່ານກ່າວວ່າ: ອີງໃສ່ການຂະຫຍາຍຕົວທາງດ້ານເສດຖະກິດສັງຄົມໃນປັດຈຸບັນ ມັນຮຽກຮ້ອງຕ້ອງການໃຫ້ອົງການຈັດຕັ້ງລັດ-ອົງການຈັດຕັ້ງມະຫາຊົນເວົ້າລວມ, ເວົ້າສະເພາະການຈັດຕັ້ງສະຫະພັນແມ່ຍິງລາວ ຕ້ອງມີການຄຸ້ມຄອງ-ນຳພາການເຄື່ອນໄຫວວຽກງານຂອງຕົນດ້ວຍກົດໝາຍ; ສະນັ້ນ, ສູນກາງສະຫະພັນແມ່ຍິງລາວ ຈຶ່ງເຫັນວ່າມີຄວາມຈຳເປັນທີ່ຈະຕ້ອງປັບປຸງກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ ທັງເປັນການຈັດຕັ້ງປະຕິບັດນະໂຍບາຍການສ້າງລັດແຫ່ງກົດໝາຍຢູ່ ສປປລາວ.

ທ່ານ ນາງ ອາລີ ວົງໜໍ່ບຸນທຳ ກ່າວຕື່ມວ່າ: ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ ປະກາດໃຊ້ຢ່າງເປັນທາງການແຕ່ວັນທີ 20 ສິງຫາ 2013, ມາເຖິງປັດຈຸບັນ ອີງໃສ່ທ່າອຽງການພັດທະນາເສດຖະກິດ-ສັງຄົມນັບມື້ຂະຫຍາຍຕົວຢ່າງກວ້າງຂວາງ; ສະນັ້ນ, ອົງການສະຫະພັນແມ່ຍິງລາວແຕ່ລະຂັ້ນ ມີຄວາມຈຳເປັນຈະຕ້ອງໄດ້ປັບປຸງພາລະບົດບາດ, ໜ້າທີ່ຂອງຕົນໃຫ້ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່. ກົດໝາຍສະບັບນີ້ ມີເນື້ອໃນລັກສະນະກວມລວມ, ບໍ່ຮັດກຸມ ຖ້າທຽບໃສ່ກົດໝາຍວ່າດ້ວຍການສ້າງນິຕິກຳເຫັນວ່າໂຄງຮ່າງຂອງກົດໝາຍຄວນໄດ້ຮັບການປັບປຸງ; ສະນັ້ນ, ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ ຈຶ່ງມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ແທດເໝາະກັບສະພາບການຕົວຈິງໃນແຕ່ລະໄລຍະ.

# ບາງຄຳເຫັນຂອງ ສສຊ ຕໍ່ບົດລາຍງານຂອງລັດຖະບານ

(ສພຊ) - ໃນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, **ທ່ານ ຄຳດີ ວົງລ້ອມ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ** ໄດ້ປະກອບ



ຄຳເຫັນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ປະຈຳປີ 2024 ແລະ ທິດທາງແຜນການປີ2025ເຊິ່ງທ່ານມີຄຳຄິດຄຳເຫັນເປັນການແລກປ່ຽນ ແລະ ຂໍ້ສະເໜີບາງດ້ານຕໍ່ລັດຖະບານດັ່ງນີ້:

1. ຄົ້ນຄວ້າພິຈາລະນາໃຫ້ມີໂຄງການກໍ່ສ້າງທ່າບົກຢູ່ສະຖານີລົດໄຟເມືອງໄຊ ແຂວງອຸດົມໄຊ: ໂດຍປະຕິບັດຕາມທິດທາງແຜນການກໍ່ສ້າງທາງລົດໄຟແມ່ນໄດ້ກຳນົດໃຫ້ມີທ່າບົກ, ແຕ່ມາຮອດປັດຈຸບັນ ໂຄງການດັ່ງກ່າວກໍຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ; ພ້ອມນັ້ນ, ຂໍໃຫ້ຊຸກຍູ້ການສ້າງສິ່ງອຳນວຍຄວາມສະດວກໃນການຂົນສົ່ງສິນຄ້າທາງລົດໄຟເປັນຕົ້ນເພີ່ມຕູ້ລົດໄຟ ແລະ ຕູ້ຄອນເທນເນີ, ເພີ່ມເຈົ້າໜ້າທີ່ກວດກາສິນຄ້າ ແລະ ນະໂຍບາຍອື່ນໆ ທີ່ເປັນການສົ່ງເສີມພາກທຸລະກິດພາຍໃນປະເທດໃຫ້ຫຼາຍຂຶ້ນກວ່າເກົ່າ ເພາະຜ່ານມາເຫັນວ່າ ສະພາບການຈັດຕັ້ງປະຕິບັດການຂົນສົ່ງດັ່ງກ່າວຍັງບໍ່ທັນພຽງພໍ ນັບທັງຂົນສົ່ງໂດຍສານກໍເຊັ່ນດຽວກັນແຕ່ລະມື້ຖ້າຈະຈອງປີ້ລົດໄຟ ຕ້ອງໄດ້ຈອງລ່ວງໜ້າເປັນອາທິດ, ຖ້າຈອງມື້ນີ້ໄປມື້ອື່ນແມ່ນຍາກ.

2. ພິຈາລະນາທຶນສົມທົບໂຄງການກໍ່ສ້າງສູນພັດທະນາສີມືແຮງງານຂອງບັນດາແຂວງພາກເໜືອຢູ່ແຂວງອຸດົມໄຊເຊິ່ງເປັນທຶນຊ່ວຍເຫຼືອລ້າຂອງລັດຖະບານສປຈີນລວມມູນຄ່າທັງໝົດ 147.26 ລ້ານຢວນ ແລະ ໄດ້ເລີ່ມຈັດຕັ້ງປະຕິບັດແຕ່ປີ 2023 ມາຮອດປັດຈຸບັນ ແມ່ນສຳເລັດ 50 ສ່ວນຮ້ອຍ; ສ່ວນລັດຖະບານລາວ ຕ້ອງໄດ້ສົມທົບທຶນກໍ່ສ້າງພື້ນຖານໂຄງລ່າງ ເປັນຕົ້ນແມ່ນສ້າງເສັ້ນທາງປູຢາງສອງຊັ້ນເຂົ້າຫາສູນດັ່ງກ່າວ, ຕິດຕັ້ງໄຟຟ້າ, ນ້ຳປະປາ ແລະ ຊົດເຊີຍຜົນກະທົບຈາກການໄກ່ເກ່ຍເນື້ອທີ່ດິນປຸກສ້າງຂອງໂຄງການດັ່ງກ່າວ ເຊິ່ງເປັນມູນຄ່າທັງໝົດ 12.663 ຕື້ກີບ (ສິບສອງຕື້ຫົກຮ້ອຍຫົກສິບສາມລ້ານກວ່າກີບ) ມາຮອດປັດຈຸບັນທຶນດັ່ງກ່າວຍັງບໍ່ທັນໄດ້ຈັດຕັ້ງປະຕິບັດ. ສະນັ້ນ, ສະເໜີໃຫ້ເອົາເຂົ້າແຜນປີ 2025 ຢ່າງໜ້ອຍໃຫ້ໄດ້ 10 ຕື້ກີບເພື່ອເປັນການສ້າງກຳລັງໃຈໃຫ້ແກ່ຜູ້ລົງທຶນ ເພາະວ່າເພິ່ນກໍລົງທຶນໄປຮອດ 100 ກວ່າລ້ານຢວນ, ແຕ່ຝ່າຍລາວເຮົາຊ້ຳພັດບໍ່ທັນໄດ້ຈັດຕັ້ງປະຕິບັດຫຍັງເລີຍ.

3. ພິຈາລະນາບັນຫາໜີ້ສິນການກໍ່ສ້າງພື້ນຖານໂຄງລ່າງເປັນຕົ້ນຖະໜົນຫົນທາງ, ການລົງທຶນໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຢູ່ແຂວງອຸດົມໄຊ ນັບທັງທຶນໄພພິບັດແຕ່ປີ 2023 ກໍຍັງບໍ່ທັນຊຳລະໃຫ້ແກ່ບັນດາບໍລິສັດທີ່ໄດ້ລົງທຶນກໍ່ສ້າງໄປກ່ອນນັ້ນ ຈະເຮັດໃຫ້ຜູ້ປະກອບການບໍ່ຢາກລົງທຶນກ່ອນ;ປັດຈຸບັນໂຄງການຕ່າງໆທີ່ຈະໃຫ້ບັນດາບໍລິສັດມາປະມູນມັນກໍຍາກຢູ່ແລ້ວ ເຂົາເຈົ້າກໍບໍ່ຢາກມາລົງທຶນ ເພາະວ່າ 2-3 ປີ ລັດຖະບານກໍບໍ່ໄດ້ສະໜອງທຶນໃນການຊຳລະໂຄງການຕ່າງໆໃຫ້,ເຊິ່ງລາຍລະອຽດນັ້ນ ມີໜັງສືສະເໜີຈາກອົງການປົກຄອງແຂວງ ຫາກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອື່ນໆທີ່ກ່ຽວຂ້ອງແລ້ວ.

(ສພຊ) - ວາລະກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນຈັນທີ 18 ພະຈິກຜ່ານມາ, **ທ່ານ ໄຊຍະເດດ ພຸຍຍະວົງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ** ໄດ້ມີຄຳເຫັນແລກປ່ຽນຕໍ່ບົດລາຍງານຂອງລັດຖະບານທີ່ຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມາພ້ອມທັງທິດທາງແຜນການປີ 2025 ແລະ ໃນ 5 ປີຕໍ່ໜ້າ ກໍຄືແຜນການຄັ້ງທີ X ເຊິ່ງໃນໄລຍະ 20-25 ປີທີ່ຜ່ານມາ, ຕາມການສຶກສາ ພວກເຮົາວົນວຽນຢູ່ໃນກົນໄກອັນເກົ່າຄືການສ້າງພື້ນຖານໂຄງລ່າງ ສ້າງແລ້ວກໍບໍ່ຮັກສາປະໃຫ້ເປ່ເພ ເປັນຕົ້ນການສ້າງທາງ ແມ່ນເຮັດແລ້ວເຮັດອີກ, ການຄວບຄຸມນ້ຳໜັກ ການລາກແກ່ຕ່າງໆ ກໍຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ; ການສ້າງກັບການຮັກສາ ຄວນໃຫ້ສົມຄູ່ກັນ, ຖ້າຍັງເປັນຄືເກົ່າ ພວກເຮົາກໍຈະວົນວຽນຢູ່, ໜີ້ເກົ່າບໍ່ໝົດ ສ້າງໜີ້ໃໝ່ ແລະ ການນຳເຂົ້າລົດບັນທຸກທີ່ສາມາດຮັບນ້ຳໜັກຫຼາຍເກີນມາດຕະຖານຂອງເສັ້ນທາງບ້ານເຮົາ ກໍຄວນຫ້າມແຕ່ຫົວທີຈະດີຫຼືບໍ່? ຖ້າປ່ອຍໃຫ້ນຳເຂົ້າມາ ແນ່ນອນເຂົາເຈົ້າກໍໄປລາກແກ່ຄືເກົ່າ ແລະ ກໍເປ່ເພຄືເກົ່າ. ດັ່ງນັ້ນ, ການສ້າງລັດປະຊາທິປະໄຕປະຊາຊົນ ກໍຄືສັງຄົມນິຍົມ, ພວກເຮົາຍັງວົງວົນຢູ່ໃນຈຸດເກົ່າ ການສ້າງທາງບໍ່ແລ້ວບໍ່ທົ່ວຈັກເທື່ອ, ບັນຫານີ້ຄວນມີບາດກ້າວການຫັນປ່ຽນ.

ບັນຫາທີ 2 ຕິດພັນກັບການປ່ອຍກູ້ຕາມນະໂຍບາຍກະຕຸ້ນເສດຖະກິດ: ເຫັນວ່າ2ມາດຕະຖານ, ຜູ້ໜຶ່ງສາມາດກູ້ຢືມໄດ້ລາຄາຖືກ ຜູ້ໜຶ່ງພັດໄດ້ລາຄາສູງ ຖ້າເປັນແນວນັ້ນການແຂ່ງຂັນທາງດ້ານທຸລະກິດ ກໍບໍ່ມີຄວາມຍຸຕິທຳ; ໃນໄລຍະຜ່ານມາພວກເຮົາກໍມີບົດຮຽນໃນການປ່ອຍກູ້ຫຼາຍແລ້ວ ແລະ ໝາກຜົນທີ່ໄດ້ຮັບກໍບໍ່ມີຫຍັງ, ສຸດທ້າຍກໍກາຍເປັນໜີ້ສິນຄຸມເຄືອຫັນໜີ້ເປັນທຶນ ມອບໜີ້ສິນໃຫ້ກັບລັດຖະບານ, ກະຊວງການເງິນເປັນຜູ້ຮັບຜິດຊອບ ກໍຈົບຢູ່ນັ້ນ. ສະນັ້ນ, ເພື່ອໃຫ້ມີຄວາມຍຸຕິທຳໃນຕໍ່ໜ້າ ກໍຢາກໃຫ້ປິດໃນແຜນການຄັ້ງທີ IX ແລະ ແຜນການຄັ້ງທີ X ນີ້ ຈັດຕັ້ງປະຕິບັດໃໝ່ພ້ອມກັນ ຫັນມາຄຸ້ມຄອງເງິນຕາໃຫ້ມີສະຖຽນລະພາບ, ເງິນເຟີ້ກໍບໍ່ໃຫ້ເກີນ 3% ບວກຄ່າໃຊ້ຈ່າຍສິ້ນເປືອງຕ່າງໆ, ບັນດາທະນາຄານທຸລະກິດປ່ອຍກູ້ ກໍບໍ່ໃຫ້ເກີນລະດັບ 5-6% ມັນກໍເປັນການກະຕຸ້ນເສດຖະກິດທີ່ມີປະສິດທິຜົນ, ຈຶ່ງບໍ່ມີສອງມາດຕະຖານ.



ບັນຫາ 3 ຕິດພັນກັບການສ້າງໂຄງການພັດທະນາ: ເຂົ້າ Google earth ເບິ່ງແຜນທີ່ຢູ່ເທິງດາວທຽມ ແລ້ວມາຂີດເອົາດິນປະຊາຊົນເພື່ອຈະພັດທະນານັ້ນນີ້, ພາກັນຈ້າງນັກແຕ້ມຮູບ 3D, ໄປຈ້າງໂທລະພາບປະເທດເພື່ອນບ້ານ ໂຄສະນາວ່າຈະມີການພັດທະນາແນວນັ້ນແນວນີ້ແລ້ວກໍມາບັງຄັບໃຫ້ພາກລັດອອກນິຕິກຳ, ເອົາເຈ້ຍ A4 ໄປເລາະຂາຍ ອາໄສເອົາສ່ວນຕ່າງລະຫວ່າງຄ່າຊົດເຊີຍປະຊາຊົນກັບໃຫ້ພວກນາຍທຶນ, ບັນຫານີ້ຄວນຢຸດເຊົາບໍ່? ປະຊາຊົນເຂົາສູນເສຍພາຫະນະການຜະລິດ ແລະ ກໍຕໍ່ວ່າຫຼາຍ; ພວກເຂົາວ່າການພັດທະນາຂອງພາກລັດນີ້ແມ່ນເຫັນດີເປັນເອກະພາບທີ່ສຸດ, ແຕ່ວ່າພັດທະນາແລ້ວຊີວິດການເປັນຢູ່ຕ້ອງດີຂຶ້ນ ບໍ່ແມ່ນຈະຕ້ອງສູນເສຍພື້ນທີ່ການຜະລິດ ຊ້ຳພັດເຮັດໃຫ້ທຸກໄປຕື່ມ, ບັນຫານີ້ຢູ່ນະຄອນຫຼວງວຽງຈັນກໍມີຫຼາຍ ເປັນຕົ້ນແມ່ນຢູ່ເມືອງໄຊເສດຖາ ຢາກໃຫ້ທາງລັດຖະບານພິຈາລະນາຄືນຕື່ມ.

ບັນຫາສຸດທ້າຍ ກ່ຽວພັນກັບວຽກວັດທະນະທຳ-ສັງຄົມ: ສະເໜີປະຕິຮູບຕື່ມຫຼັກສູດການຮຽນ-ການສອນ ໃຫ້ແທດເໝາະກັບຈຸດພິເສດຂອງແຕ່ລະທ້ອງຖິ່ນ ເປັນຕົ້ນແມ່ນຢູ່ເຂດຊົນນະບົດ ປະຊາຊົນມີຄວາມທຸກຍາກຫຼາຍ ຊີວິດການເປັນຢູ່ພວກເຂົາຫາກິນເປັນຄາບ, ຄາບເຊົ້າໄປຫາສ້ອນຫາຍິງຫາລ່າເນື້ອມາກິນ, ຕອນສວາຍ ຕອນແລງກໍຄືກັນ; ບາງທ້ອງຖິ່ນກໍຂາດຄູອາຈານ, ກໍເອົາໄປສອນໂຮມເປັນຫ້ອງດຽວກັນ. ດັ່ງນັ້ນ, ເພື່ອແກ້ໄຂບັນຫານີ້ ຄວນດັດປັບໃຫ້ເຂົ້າຕາມຄວາມເປັນຈິງບໍ່? ຕາມຜົນການຄົ້ນຄວ້າຂອງນັກວິທະຍາສາດ, ເດັກນ້ອຍອາຍຸແຕ່ 6-11 ປີເຂົາບໍ່ໃຫ້ຮຽນໝົດມື້ໃຫ້ຮຽນແຕ່ 1-3 ຊົ່ວໂມງ, 12-14 ປີ 2-4 ຊົ່ວໂມງ, 15-18 ກໍມີແຕ່ 4-6 ຊົ່ວໂມງ ຈັ່ງຊັ້ນຈຶ່ງວ່າໃຫ້ເດັກຮຽນເຄິ່ງມື້ກໍໄດ້, ເຫຼືອນັ້ນກໍໃຫ້ໄປຊ່ວຍພໍ່-ແມ່ ແລະ ຮຽນເອງຢູ່ເຮືອນ ບັນຫານີ້ຄວນເບິ່ງຄືນບໍ່? ຖ້າບໍ່ດັ່ງນັ້ນ, ຢູ່ເຂດຊົນນະບົດ ພໍ່-ແມ່ ຜູ້ປົກຄອງນັກຮຽນ ອາໄສແຮງງານຂອງລູກ, ສຸດທ້າຍກໍບົບບັງຄັບໃຫ້ລູກຫຼານອອກໂຮງຮຽນ; ດັ່ງນັ້ນ, ຄວນດັດປັບໃຫ້ໄດ້ທັງສອງດ້ານ ດ້ານຄອບຄົວກໍໃຫ້ໄດ້ແລະດ້ານການສຶກສາທີ່ລັດຖະບານສົ່ງເສີມ ກໍໃຫ້ໄດ້ ຢາກໃຫ້ພິຈາລະນາຕື່ມ. ນອກຈາກນັ້ນ, ຖ້າຕັດລາຍຈ່າຍຈາກວົງຈອນການສ້າງພື້ນຖານໂຄງລ່າງແບບຊ້ຳຊາກ ມາສຸມໃສ່ບັນຫາດັ່ງກ່າວ ໂດຍການສະໜອງວັດຖຸອຸປະກອນການຮຽນ-ການສອນ ຈະເຮັດໃຫ້ການພັດທະນາທາງດ້ານການສຶກສາດີຂຶ້ນ ແລະໃນການປຸກລະດົມຂົນຂວາຍໃຫ້ເດັກນ້ອຍຢາກຮ່ຳຮຽນ, ບໍ່ຢາກໃຫ້ປຸກລະດົມໃຫ້ເຂົາຄິດວ່າຕ້ອງເປັນເຈົ້າເປັນນາຍ;ເດັກນ້ອຍເຂົາມີຄວາມໄຝ່ຝັນແນວໃດ ກໍສຸດແລ້ວແຕ່, ບາດຮອດມື້ແລ້ວຫາກດັດປັບເຂົ້າໂຕເຂົາເອງ,ຂ້າພະເຈົ້າກໍເຄີຍຝັນວ່າຢາກເປັນຊ່າງໄມ້ ສຸດທ້າຍກໍມາເປັນຜູ້ແທນ. ດັ່ງນັ້ນ, ອີງໃສ່ຄວາມເປັນຈິງປັດຈຸບັນນີ້, ສຳຄັນແມ່ນລະດົມຂົນຂວາຍໃຫ້ພວກເຂົາຮ່ຳຮຽນ ອະນາຄົດຈະເປັນແບບໃດປ່ອຍໃຫ້ຕັດສິນເອງ.

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນອັງຄານທີ 19 ພະຈິກຜ່ານມາ,



**ທ່ານ ນາງ ບຸນມີ ຈຸນລະຈັກ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ** ໄດ້ມີຄຳເຫັນແລກປ່ຽນຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024 ດັ່ງນີ້:

1. ການອອກໃບຕາດິນໃຫ້ແກ່ປະຊາຊົນ: ຜ່ານການລົງພົບປະພໍ່ແມ່ປະຊາຊົນ ເຫັນວ່າຂໍ້ສະເໜີຫຼາຍທີ່ສຸດແມ່ນການອອກໃບຕາດິນ, ແຕ່ໃນບົດລາຍງານບອກວ່າ ບໍ່ສາມາດຈະປະຕິບັດໄດ້ຕາມແຜນທີ່ກຳນົດໄວ້; ເຖິງຢ່າງໃດກໍຕາມ, ສະເໜີພາກສ່ວນກ່ຽວຂ້ອງເບິ່ງຄືນຕື່ມການອອກໃບຕາດິນໃຫ້ແກ່ເປົ້າໝາຍທີ່ໄດ້ເສຍຄ່າທຳນຽມ ຫຼື ການວັດແທກສຳເລັດແລ້ວ, ຢາກໃຫ້ເບິ່ງເປົ້າໝາຍນີ້ສາກ່ອນ ເພາະຜ່ານມາເຂົາເຈົ້າໄດ້ເສຍຄ່າທຳນຽມ 5-6 ປີແລ້ວ ແຕ່ຍັງບໍ່ໄດ້ຮັບໃບຕາດິນ.

2. ການຫັນເປັນທັນສະໄໝໃນການເກັບລາຍຮັບ ໂດຍສະເພາະລາຍຮັບຈາກທີ່ດິນກໍຄືລາຍຮັບຈາກການເສຍຄ່າທຳນຽມທາງ: ຜ່ານມາເຫັນວ່າສັງຄົມໃຫ້ການສະໜັບສະໜູນ, ເຫັນດີເຫັນພ້ອມໃນການຈັດຕັ້ງປະຕິບັດການຫັນເປັນທັນສະໄໝ ເຮັດໃຫ້ມີລາຍຮັບເພີ່ມຂຶ້ນຫຼາຍຈາກການເກັບຜ່ານແອັບຫຼືຜ່ານລະບົບທະນາຄານ; ແຕ່ພໍຈັດຕັ້ງປະຕິບັດມາຮອດປີ 2024 ເຫັນວ່າພວກເຮົາໄດ້ຢຸດ ຫຼືວ່າໂຈະການເກັບຜ່ານລະບົບທັນສະໄໝ, ເຮັດໃຫ້ມີຫາງສຽງຈາກສັງຄົມຫຼາຍຢ່າງຕໍ່ກັບການຫັນເປັນທັນສະໄໝແລະໄລຍະໜຶ່ງກໍໄດ້ກັບມາສູ່ໄລຍະເດີມ (ບົດລາຍງານໄດ້ເວົ້າແຈ້ງແລ້ວ) ສະນັ້ນ, ສະເໜີລັດຖະບານສືບຕໍ່ເຮັດແນວໃດຢາກໃຫ້ຫັນເປັນທັນສະໄໝຕື່ມອີກ ແລ້ວກໍບໍ່ຢາກໃຫ້ກັບໄປກັບມາ; ຂ້າພະເຈົ້າສະໜັບສະໜູນຄວນຫັນເປັນທັນສະໄໝ ອັນດີແມ່ນມີຫຼາຍ ສາມາດເກັບລາຍຮັບໄດ້ຢ່າງຄົບຖ້ວນ ແລະ ກໍບໍ່ມີສິ່ງຮົ່ວໄຫຼໃນສິ່ງທີ່ເຮົາເກັບໄດ້, ເປັນຕົວເລກທີ່ຊັດເຈນຢູ່ໃນລະບົບທັນສະໄໝ ແລະເຮັດໃຫ້ຜູ້ໄປຈ່າຍໄປເສຍເງິນ ມີຄວາມເຊື່ອໝັ້ນສູງ.

3. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ: ຜ່ານມາລັດຖະບານໄດ້ເອົາໃຈໃສ່ສູງຕໍ່ກັບການປະຕິບັດວຽກງານດັ່ງກ່າວ ມີຄອບຄົວ, ບ້ານ, ເມືອງ ທີ່ພົ້ນທຸກ ເປັນຕົວຊີ້ບອກຫຼາຍສົມຄວນ ລວມທັງສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍໃນຊົນນະບົດ ກໍໄດ້ຫຼາຍຈຸດ; ເຖິງຢ່າງໃດກໍຕາມ, ໃນການປະຕິບັດໃຫ້ເອົາໃຈໃສ່ກຳນົດມາດຕະຖານໃຫ້ຊັດເຈນ ແລະ ມີຄວາມຍືນຍົງເພາະມີຫຼາຍຄອບຄົວ, ບ້ານ, ເມືອງຕ່າງໆ ພາຍຫຼັງທີ່ປະກາດໄປແລ້ວກໍກັບຄືນສູ່ຄວາມທຸກຍາກຄືເກົ່າແມ່ນຍັງມີຫຼາຍ, ອັນນີ້ຍ້ອນຫຍັງ? ຍ້ອນການກຳນົດ

ອ່ານຕໍ່ໜ້າ 7

## ສສຊ...

(ຕໍ່ຈາກໜ້າ 6)

ມາດຕະຖານບໍ່ຊັດເຈນ, ຕອນດຳລັດ 309 ກໍແນວໜຶ່ງ ບາດມາຮອດ 348 ເຫັນວ່າທຸກຍາກຄືນອີກ, ອັນນີ້ພວກເຮົາບໍ່ໄດ້ວິເຄາະວິໄຈຢ່າງຊັດເຈນວ່າມັນມີຫຍັງແດ່ ແລະ ໃຫ້ມີຄວາມຍືນຍົງ; ກ່ອນຈະປະກາດ ກໍອີງໃສ່ມາດຕະຖານຢ່າງຊັດເຈນ, ບໍ່ໃຫ້ຖືແຕ່ປະລິມານສຳຄັນ ໃຫ້ເອົາຄຸນນະພາບເປັນຕົ້ນຕໍ, ສົມມຸດວ່າບ້ານໃດພົ້ນທຸກກໍພົ້ນທຸກອີ່ຫຼີ, ສາມາດເປັນຕົ້ນແບບຕົວແບບໃຫ້ແກ່ບ້ານອື່ນໆທີ່ບໍ່ທັນໄດ້ປະກາດ.

4. ການປະຕິບັດນະໂຍບາຍຕໍ່ພະນັກງານ-ລັດຖະກອນຂັ້ນວິຊາການ ທີ່ມີນະໂຍບາຍນ້ຳມັນລົດໃຫ້ເຂົາເຈົ້າ 50 ພັນກີບ/ເດືອນ ເຊິ່ງມາຮອດປັດຈຸບັນເຫັນວ່າບໍ່ສອດຄ່ອງບໍ່ເໝາະສົມກັບຄ່າຄອງຊີບຕ່າງໆ, ຖ້າເປັນໄປໄດ້ໃຫ້ກຳນົດເປັນລິດ ສົມມຸດວ່າຈະໃຫ້ 10 ລິດ ຫຼືວ່າເທົ່າໃດ? ເພາະມູນຄ່າລາຄານ້ຳມັນຕໍ່ລິດ ກໍຈະຄູນຕາມນັ້ນ, ຖ້າກຳນົດເປັນເງິນ 50 ພັນກີບ ປັດຈຸບັນກໍຈະໄດ້ພຽງ 2 ລິດກວ່າ ເຫັນວ່າມີຄວາມຫຍຸ້ງຍາກຕໍ່ພະນັກງານ-ລັດຖະກອນຫຼາຍ; ສະເໜີລັດຖະບານພະຍາຍາມຄົ້ນຄວ້າພິຈາລະນາຕື່ມ, ເຮັດແນວໃດໃຫ້ມັນສອດຄ່ອງກັບສະພາບເສດຖະກິດໃນປັດຈຸບັນ.

(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນທີ 19 ພະຈິກຜ່ານມາ, **ທ່ານ**



**ສີວິໄລ ແກ້ວປະເສີດ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ** ໄດ້ມີຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ໂດຍລົງເລິກຂົງເຂດວຽກງານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂດຍສະເພາະແມ່ນແຫຼ່ງທ່ອງທ່ຽວທີ່ຕິດພັນກັບການອະນຸຍາດການລົງທຶນ, ການສຳປະທານ, ການສ້າງຕັ້ງເປັນເຂດເສດຖະກິດພິເສດ. ຕໍ່ກັບບັນຫານີ້ ຢູ່ໃນບົດວິພາກມີບາງດ້ານ ການພັດທະນາຕ້ອງໄປຄວບຄູ່ກັນ ເຮັດໃຫ້ພໍ່ແມ່ປະຊາຊົນທີ່ຢູ່ໃກ້ຄຽງມີສ່ວນຮ່ວມ ແລະ ມີວຽກເຮັດງານທຳ, ແຕ່ໃນຕົວຈິງຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ ຍົກຕົວຢ່າງຢູ່ຈຳປາສັກຜ່ານການຕິດຕາມກວດກາເຫັນໄດ້ດັ່ງນີ້: ຢູ່ເຂດເສດຖະກິດພິເສດ ມະຫານະທີສີພັນດອນ ທີ່ຕິດພັນກັບແຫຼ່ງທ່ອງທ່ຽວນ້ຳຕົກຕາດຄອນພະເພັງທີ່ເປັນໄຂ່ມຸກຂອງແມ່ນ້ຳຂອງ ໃນເມື່ອກ່ອນແມ່ນມີຫຼາກຫຼາຍ ເມື່ອແຂກເຂົ້າມາທ່ອງທ່ຽວແມ່ນເລືອກຊົມໃຊ້ຈັບຈ່າຍ, ເລືອກບໍລິໂພກຕາມໃຈມັກ; ພາຍຫຼັງມີເຂດເສດຖະກິດພິເສດແມ່ນມີພຽງ 1-2 ຮ້ານ ໃນນັ້ນກໍໄດ້ເສຍພັນທະໃຫ້ແກ່ບໍລິສັດເດືອນໜຶ່ງ 14 ລ້ານກີບ, ສະເພາະທີ່ເປັນຮ້ານອາຫານ, ຮ້ານບໍລິການຢູ່ໃນແຫຼ່ງທ່ອງທ່ຽວນັ້ນກໍໄດ້ເສຍພັນທະໃຫ້ພາກລັດປີ 3 ລ້ານກີບ. ມາຮອດເດືອນ 5 ປີ 2024 ເຖິງປັດຈຸບັນ ຜູ້ເຊົ່າສຳປະທານເຮັດຮ້ານອາຫານ ແລະບໍລິສັດບໍ່ລົງລອຍກັນ, ປັດຈຸບັນບໍ່ມີຮ້ານອາຫານບໍ່ມີການບໍລິການຢູ່ໃນແຫຼ່ງທ່ອງທ່ຽວ, ທາງບໍລິສັດໃຫ້ເຫດຜົນວ່າຈະມີການບູລະນະມີການປັບປຸງ, ແຕ່ມາຮອດປັດຈຸບັນ ກໍຍັງບໍ່ທັນໄດ້ເຮັດຫຍັງ; ສະນັ້ນ, ເມື່ອນັກທ່ອງທ່ຽວເຂົ້າມາທ່ອງທ່ຽວ ກໍມີແຕ່ແວ່ຜ່ານແລ້ວອອກໄປ ເຮັດໃຫ້ທັງພາກລັດ ແລະ ພໍ່ແມ່ປະຊາຊົນຂາດລາຍຮັບ ເຮັດໃຫ້ເສຍພາບລັກຂອງແຫຼ່ງທ່ອງທ່ຽວ. ຢາກສະເໜີໃຫ້ລັດຖະບານຄົ້ນຄວ້າ, ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ປັບປຸງໃຫ້ໄວເພື່ອເປັນການສົ່ງເສີມພໍ່ແມ່ປະຊາຊົນເຂດໃກ້ຄຽງໃຫ້ໄດ້ມີສ່ວນຮ່ວມໃນການສ້າງວຽກເຮັດງານທຳໃຫ້ແກ່ເຂົາເຈົ້າ ແລະ ເພື່ອເປັນການຮອງຮັບໃຫ້ແກ່ນັກທ່ອງທ່ຽວໃຫ້ທັນກັບລະດູການ ເພາະປັດຈຸບັນນີ້ນັກທ່ອງທ່ຽວພວມເຂົ້າມາຫຼາຍ ແລະ ພວກເຮົາກໍຢັ້ງຢືນນຳກັນແລ້ວວ່າ ວຽກງານທ່ອງທ່ຽວແມ່ນລາຍຮັບມະຫາສານ.

ສະເໜີລັດຖະບານແລະພາກສ່ວນກ່ຽວຂ້ອງ ກວດກາປະເມີນຄືນການຄຸ້ມຄອງເກັບລາຍຮັບຈາກການອະນຸຍາດການລົງທຶນສຳປະທານທີ່ຕິດພັນກັບແຫຼ່ງທ່ອງທ່ຽວ ໂດຍສະເພາະແຫຼ່ງທ່ອງທ່ຽວຄອນພະເພັງ, ພາຍຫຼັງທີ່ອະນຸຍາດໃຫ້ມີການລົງທຶນ ເຮົາໄດ້ຮັບຫຍັງ ແລະ ມີຜົນເສຍຫຍັງ ໂດຍສະເພາະຢູ່ຈຸດແຫຼ່ງທ່ອງທ່ຽວ (ປັດຈຸບັນແມ່ນເສຍພາບລັກ, ສະຖານທີ່ຮົກເຮື້ອ, ບໍ່ມີບ່ອນບໍລິໂພກເປັນຕົ້ນ: ຮັບປະທານອາຫານທ່ຽງ ຈຸດຊົມວິວທີ່ຈິບງາມ).

ອີກບັນຫາໜຶ່ງ, ຢາກໃຫ້ເຂັ້ມງວດຕື່ມ, ເອົາໃຈໃສ່ຊຸກຍູ້ບໍລິສັດປະຕິບັດຕາມສັນຍາໃຫ້ໄດ້; ຜ່ານມາຖືວ່າບໍລິສັດສັນຍາກັບພາກສ່ວນກ່ຽວຂ້ອງ ໂດຍສະເພາະສັນຍາເຊົ່າພາຫະນະກົນຈັກ ຫຼືແຮງງານແມ່ນບໍ່ປະຕິບັດຕາມສັນຍາ, ບໍ່ຈ່າຍຄ່າຈ້າງຄ່າເຊົ່າໃຫ້ເຂົາເຈົ້າ ເຮັດໃຫ້ມີຄວາມຫຍຸ້ງຍາກສັບສົນ, ເຮັດໃຫ້ຜູ້ທີ່ມາຮັບຈ້າງບໍ່ໄດ້ເງິນຄ່າຈ້າງ ເກີດມີປາກົດການຫຍໍ້ທໍ້ລັກເຄື່ອງອຸປະກອນຂອງບໍລິສັດ ຫຼື ຢຸດເຊົາບໍ່ເຮັດວຽກ, ຮື້ຖອນວຽກງານທີ່ຕົນເອງເຮັດຜ່ານມາອັນນີ້ກໍສ້າງຄວາມສັບສົນໃຫ້ແກ່ທ້ອງຖິ່ນພວກເຮົາ, ສະເໜີໃຫ້ພາກສ່ວນກ່ຽວຂ້ອງເອົາໃຈໃສ່ຄຸ້ມຄອງຕິດຕາມຕື່ມ.



(ສພຊ) - **ທ່ານ ນາງ ມິນາພອນ ໄຊສົມພູ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື** ໄດ້ມີຄຳເຫັນແລກປ່ຽນຕໍ່ບົດລາຍງານຂອງລັດຖະບານ ໃນວັນທີ 18 ພະຈິກ 2024 ຄື: ບັນຫາທີ 1 ບົດລາຍງານຂອງລັດຖະບານໄດ້ຕີລາຄາວ່າສາເຫດທີ່ພາໃຫ້ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນທີ່ບໍ່ໄດ້ຮັບການແກ້ໄຂດີເທົ່າທີ່ຄວນເນື່ອງມາຈາກສາມປັດໄຈ: 1. ຄວາມຮັບຜິດຊອບຕໍ່ໜ້າທີ່ການເມືອງຂອງພະນັກງານ-ລັດຖະກອນຈຳນວນໜຶ່ງຍັງບໍ່ທັນສູງ, 2. ການຫັນປ່ຽນບຸກທະລຸທາງດ້ານຈິນຕະນາການ ກໍຄືການຫັນປ່ຽນໄປສູ່ອັນໃໝ່ທີ່ດີກວ່າເກົ່າຍັງຊັກຊ້າ, 3. ກົນໄກບໍລິຫານ, ການຄຸ້ມຄອງຍັງບໍ່ທັນຄ່ອງຕົວ; ການແກ້ໄຂ 3 ປັດໄຈດັ່ງກ່າວນີ້ ສະເໜີລັດຖະບານສືບຕໍ່ນຳໃຊ້ມາດຕະການບັງຄັບທີ່ໄດ້ວາງອອກໃນໄລຍະຜ່ານມາ ໃຫ້ປາກົດຜົນເປັນຈິງແລະເປັນຮູບປະທຳຫຼາຍຂຶ້ນກວ່າເກົ່າເພື່ອກຽມພ້ອມໃນການຈັດຕັ້ງປະຕິບັດມະຕິສະບັບເລກທີ 04/ກມສພ, ລົງວັນທີ 11 ເມສາ 2024 ວ່າດ້ວຍການສ້າງເສດຖະກິດ ເອກະລາດເປັນເຈົ້າຕົນເອງ ໃນໄລຍະໃໝ່ ຫຼື ສອຈ ໃຫ້ປາກົດຜົນເປັນຈິງ.

ບັນຫາທີ 2 ເຖິງວ່າຈະມີການຈັດເກັບລາຍຮັບງົບປະມານໄດ້ຕາມແຜນການ ຫຼື ລື່ນແຜນການ, ແຕ່ຍັງມີບາງຮ່ອງລາຍຮັບ ບໍ່ທັນບັນລຸຕາມແຜນທີ່ໄດ້ກຳນົດໄວ້ ໂດຍສະເພາະເປັນລາຍຮັບທີ່ມີຄວາມຍືນຍົງເປັນຕົ້ນແມ່ນຄ່າທຳນຽມທາງ, ອາກອນທີ່ດິນ, ອາກອນມອບເໝົາ; ສະເພາະຢູ່ແຂວງອັດຕະປືສາມາດຊອກສາເຫດໄດ້ກໍມີບາງສາເຫດຕົ້ນຕໍຄືແນວນັ້ນ ແລະ ໄລຍະນີ້ເປັນໄລຍະທີ່ລໍຖ້າການປະຕິບັດຕາມກົດໝາຍວ່າດ້ວຍອາກອນທີ່ດິນສະບັບປັບປຸງໃໝ່ ຍ້ອນເຫດຜົນວ່າການແຈ້ງການໃນການປະຕິບັດ ຫຼືວ່າໃຫ້ທ້ອງຖິ່ນປະຕິບັດ ມີຄວາມຊັກຊ້າ ຈົນຮອດເດືອນ 7 ຈຶ່ງໄດ້ແຈ້ງໄປ. ສະນັ້ນ, ການຈັດຕັ້ງປະຕິບັດຈຶ່ງມີຄວາມຊັກຊ້າຕື່ມ. ອີກບັນຫາໜຶ່ງ, ການປ້ອນຂໍ້ມູນທີ່ດິນໃນລະບົບເຕັກນິກມີຄວາມຫຍຸ້ງຍາກ ເຮັດໃຫ້ຜູ້ຊົມໃຊ້ພາຫະນະ ແລະ ຜູ້ຄອບຄອງສິດນຳໃຊ້ທີ່ດິນ ມີລັກສະນະສັບສົນບວກກັບເປົ້າໝາຍຈຳນວນໜຶ່ງຍັງບໍ່ທັນຈິງໃຈປະກອບສ່ວນ, ຫຼົບຫຼີກຄ່າທຳນຽມທາງ, ບໍ່ແຈ້ງຄ່າພາສີທີ່ດິນ ກໍຍັງມີຫຼາຍ ແຕ່ມາດຕະການປະຕິບັດຕໍ່ເປົ້າໝາຍດັ່ງກ່າວນັ້ນ ຍັງມີຈຳກັດຢູ່ ລວມທັງສິ່ງອຳນວຍຄວາມສະດວກຕໍ່ວຽກງານຈັດເກັບລາຍຮັບບໍ່ທັນພຽງພໍ ເປັນຕົ້ນແຜນງົບປະມານ ແລະ ອຸປະກອນອື່ນໆ ຍັງບໍ່ທັນພຽງພໍທີ່ຈະຕອບສະໜອງຕໍ່ການຈັດເກັບລາຍຮັບ ແລະ ການຫັນເປັນທັນສະໄໝໃນການຈັດເກັບລາຍຮັບ, ການຄຸ້ມຄອງລາຍຈ່າຍ ເຊິ່ງມີຄວາມສຳຄັນຫຼາຍ ຈຶ່ງສະເໜີລັດຖະບານເບິ່ງຄືນຊ່ວຍທ້ອງຖິ່ນຕື່ມອີກ, ນຳໃຊ້ທຸກຮູບການມາດຕະການ; ບ່ອນທີ່ມີເງື່ອນໄຂ ກໍຂໍໃຫ້ໄດ້ຮັບການຈັດຕັ້ງປະຕິບັດ, ບໍ່ໃຫ້ກັບຄືນເກັບຄືເກົ່າໄດ້ບໍ່? ເພາະວ່າເຄື່ອງທັນສະໄໝກໍຢາກໃຫ້ທັນສະໄໝໄປເລີຍ ບໍ່ຢາກໃຫ້ກັບໄປກັບມາ, ຕ້ອງໄດ້ລົງທຶນໃສ່ວຽກງານນີ້ຫຼາຍແດ່ເພື່ອເຮັດໃຫ້ການຈັດເກັບລາຍຮັບໄດ້ດີ.

ບັນຫາສຸດທ້າຍແມ່ນພາກສະເໜີຕໍ່ລັດຖະບານ: 1. ລາຍຮັບຂອງແຂວງທີ່ສູນກາງເກັບຊ່ວຍທີ່ຍັງບໍ່ທັນໄດ້ເຄື່ອນຍ້າຍໃຫ້ແຂວງ, ຈິດໃຈຢາກໃຫ້ທາງສູນກາງເຄື່ອນຍ້າຍໃຫ້ແຂວງ ເພາະວ່າແຂວງມີຄວາມຈຳເປັນໃນການນຳໃຊ້ເງິນດັ່ງກ່າວເຂົ້າໃນວຽກທີ່ຈຳເປັນຂອງແຂວງ; 2. ໃຫ້ລັດຖະບານເບິ່ງຄືນ ເພາະວ່າກອງປະຊຸມສະໄໝສາມັນເທື່ອທີ 7 ກໍໄດ້ສະເໜີແລ້ວ, ໜີ້ຄ້າງຈິດຮັບ-ຈິດຈ່າຍຂອງບໍລິສັດຮວ່າງແອັງ ທີ່ຕິດພັນກັບໂຄງການສະໜາມບິນສາກົນອັດຕະປື ເຫັນວ່າຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດເທື່ອ.

## ຫວນຄືນ...

(ຕໍ່ຈາກໜ້າ 1)

ຕັ້ງສະພາແຫ່ງຊາດ ໃນປີນີ້ ພໍດີຢູ່ໃນຊ່ວງເວລາທີ່ສະແຫ່ງຊາດກຳລັງດຳເນີນກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດຊຸດທີ IX, ໃນໂອກາດທີ່ມີຄວາມໝາຍຄວາມສຳຄັນນີ້ ຂ້າພະເຈົ້າ ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ຄະນະປະທານກອງປະຊຸມ ຫວນຄືນກ່ຽວກັບມູນເຊື້ອ, ຜົນງານ ແລະ ການເຄື່ອນໄຫວຂອງສະພາແຫ່ງຊາດໂດຍຫຍໍ້ດັ່ງນີ້:

ພາລະກິດປະຕິວັດຕໍ່ສູ້ກູ້ຊາດອັນອົງອາດກ້າແກ່ນ, ພິລະອາດຫານ, ດຸເດືອດຂ້ຽວຂາດ, ບໍ່ຍອມຈຳນົນ ແລະ ເສຍສະຫຼະຢ່າງໃຫຍ່ຫຼວງຂອງປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາອັນປີຊາສາມາດຂອງພັກປະຊາຊົນປະຕິວັດລາວ ຕ້ານຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ແບບໃໝ່ ໄດ້ຮັບໄຊຊະນະຢ່າງສົມບູນ ແບບບົວບໍ່ຊ້ຳນ້ຳບໍ່ຂຸ່ນ ແຕ່ຈັບປາໄດ້ທັງໝົດ, ເປັນການຍຶດອຳນາດແບບບໍ່ນອງເລືອດ ເຊິ່ງເປັນເຫດການທີ່ຫາຍາກໃນການປະຕິວັດຂອງປະຊາຊາດໃນໂລກ, ສ້າງຕັ້ງລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວຂຶ້ນຢ່າງສະຫງ່າຜ່າເຜີຍໃນວັນທີ 2 ທັນວາ 1975 ເຊິ່ງເປັນການໄຂສັງກາດໃໝ່-ສັງກາດແຫ່ງເອກະລາດ ແລະ ອິດສະລະພາບທີ່ແທ້ຈິງຂອງປະເທດຊາດ ແລະ ປະຊາຊົນລາວບັນດາເຜົ່າ, ເປີດສັກກະຫຼາດໃໝ່ໃຫ້ແກ່ການພັດທະນາປະເທດຊາດໄປສູ່ຄວາມວັດທະນາຖາວອນ.

ໃນຕະຫຼອດໄລຍະ 49 ປີຜ່ານມາ, ເຖິງວ່າປະເທດຊາດຂອງພວກເຮົາ ຈະປະສົບກັບຄວາມຫຍຸ້ງຍາກ, ສິ່ງທ້າທາຍຫຼາຍປະການກໍຕາມ, ແຕ່ພາຍໃຕ້ການນຳພາອັນຖືກຕ້ອງ ແລະ ປີຊາສາມາດຂອງພັກປະຊາຊົນປະຕິວັດລາວ, ດ້ວຍການເສີມຂະຫຍາຍມູນເຊື້ອຮັກຊາດ ແລະ ຄວາມສາມັກຄີປອງດອງທົ່ວປວງຊົນລາວທັງຊາດ ແລະ ໄດ້ຮັບການສະໜັບສະໜູນອັນໃຫຍ່ຫຼວງຈາກສາກົນ ເປັນຕົ້ນບັນດາປະເທດສັງຄົມນິຍົມ, ພວກເຮົາສາມາດປົກປັກຮັກສາໝາກຜົນຂອງການປະຕິວັດໄວ້ໄດ້ຢ່າງໜັ້ນຄົງ, ມີການພັດທະນາຈາກຈຸດເລີ່ມທີ່ຕ່ຳທີ່ສຸດ ຈົນສາມາດມີຜົນສຳເລັດຫຼາຍດ້ານ: ດ້ານການເມືອງມີສະຖຽນລະພາບທີ່ໜັກແໜ້ນ, ດ້ານເສດຖະກິດມີການຂະຫຍາຍຕົວເປັນກ້າວໆ, ມີການປ່ຽນແປງໃໝ່ ເຮັດໃຫ້ປະເທດເຮົາມີໂສມໜ້າໃໝ່ຂຶ້ນເລື້ອຍໆ, ປະຊາຊົນລາວບັນດາເຜົ່າໄດ້ເສີມຂະຫຍາຍສິດປະຊາທິປະໄຕຂອງຕົນຢ່າງເຕັມສ່ວນ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຢ່າງເປັນເຈົ້າການ; ລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວທີ່ເປັນລັດໜຸ່ມນ້ອຍ ບໍ່ສະເພາະແຕ່ສາມາດຢືນຍົງຄົງຕົວຢູ່ໄດ້ເທົ່ານັ້ນ, ແຕ່ຫາກຍັງໄດ້ຮັບການປັບປຸງ, ກໍ່ສ້າງ ແລະ ເຕີບໃຫຍ່ເຂັ້ມແຂງຂຶ້ນເປັນກ້າວໆ.

ສະພາປະຊາຊົນສູງສຸດໃນເມື່ອກ່ອນ ແລະ ສະພາແຫ່ງຊາດໃນປັດຈຸບັນ ໄດ້ຮັບການສ້າງຕັ້ງຂຶ້ນພ້ອມໆກັບການສ້າງຕັ້ງລັດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ວັນທີ 2 ທັນວາ 1975) ແລະ ໄດ້ຮັບການປັບປຸງ, ກໍ່ສ້າງ ແລະ ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ.

ສະພາປະຊາຊົນສູງສຸດຊຸດທີ I ທີ່ເປັນສະພາປະຕິບັດພາລະບົດບາດຕົ້ນຕໍໃນການເຕົ້າໂຮມຄວາມສາມັກຄີປອງດອງຊາດ, ເລືອກຕັ້ງປີ 1975, ມີສະມາຊິກຈຳນວນ 45 ທ່ານ, ຍິງ 4 ທ່ານ ເທົ່າກັບ 9%;

ສະພາປະຊາຊົນສູງສຸດຊຸດທີ II ທີ່ເປັນສະພາຮ່າງລັດຖະທຳມະນູນ ຈົນສາມາດຮັບຮອງແລະປະກາດໃຊ້ລັດຖະທຳມະນູນສະບັບທຳອິດໃນປີ 1991, ເລືອກຕັ້ງໃນປີ 1989, ມີສະມາຊິກຈຳນວນ 79 ທ່ານ, ຍິງ 5 ທ່ານ ເທົ່າກັບ 6%;

ນັບແຕ່ສະພາແຫ່ງຊາດຊຸດທີ III ຫາ ຊຸດທີ IX ແມ່ນສະພາແຫ່ງຊາດ, ສືບຕໍ່ປະຕິບັດ 3 ພາລະບົດບາດຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ. ສະພາແຫ່ງຊາດຊຸດ

ອ່ານຕໍ່ໜ້າ 8

## ທອນຄືນ...

(ຕໍ່ຈາກໜ້າ 7)

ທີ III ເລືອກຕັ້ງປີ 1992, ມີສະມາຊິກຈຳນວນ 85 ທ່ານ, ຍິງ 8 ທ່ານ ເທົ່າກັບ 9.41% ແລະ ໄດ້ປ່ຽນຊື່ຈາກສະພາປະຊາຊົນສູງສຸດມາເປັນສະພາແຫ່ງຊາດ;

ສະພາແຫ່ງຊາດຊຸດທີ IV ເລືອກຕັ້ງປີ 1997 ເລືອກເອົາຜູ້ແທນໄດ້ 99 ທ່ານ, ຍິງ 21 ທ່ານ ເທົ່າກັບ 21.21%;

ສະພາແຫ່ງຊາດຊຸດທີ V ເລືອກຕັ້ງປີ 2002 ເລືອກເອົາຜູ້ແທນໄດ້ 109 ທ່ານ, ຍິງ 25 ທ່ານ ເທົ່າກັບ 22.94%;

ສະພາແຫ່ງຊາດຊຸດທີ VI ເລືອກຕັ້ງປີ 2006 ເລືອກເອົາຜູ້ແທນໄດ້ 115 ທ່ານ, ຍິງ 29 ທ່ານ ເທົ່າກັບ 25.22%;

ສະພາແຫ່ງຊາດຊຸດທີ VII ເລືອກຕັ້ງປີ 2011 ເລືອກເອົາຜູ້ແທນໄດ້ 132 ທ່ານ, ຍິງ 33 ທ່ານ ເທົ່າກັບ 25%;

ສະພາແຫ່ງຊາດຊຸດທີ VIII ເລືອກຕັ້ງປີ2016 ປະກອບດ້ວຍ 8 ກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ ມີສະມາຊິກຈຳນວນ149ທ່ານ, ຍິງ 41 ທ່ານ ເທົ່າກັບ 27.5%;

ສະພາແຫ່ງຊາດຊຸດທີ IX ເລືອກຕັ້ງປີ 2021 ປະກອບມີ 9 ກຳມາທິການ ແລະ ຄະນະເລຂາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດໄດ້ເພີ່ມຂຶ້ນເປັນ 164 ທ່ານ, ຍິງ 36 ທ່ານ ເທົ່າກັບ 21.95%.

ຈຳນວນສະມາຊິກສະພາແຫ່ງຊາດ ທຽບໃສ່ສະພາປະຊາຊົນສູງສຸດ ຊຸດທີ I ໄດ້ເພີ່ມຂຶ້ນເກືອບ 4 ເທົ່າ.

ໃນຕະຫຼອດ 49 ປີທີ່ຜ່ານມາ, ສະພາແຫ່ງຊາດ ເວລາໃດກໍໄດ້ຕິດພັນຢ່າງສະໜິດແໜ້ນກັບປະຊາຊົນລາວບັນດາເຜົ່າ ເປັນຕົວແທນແຫ່ງຜົນປະໂຫຍດຂອງເຂົາເຈົ້າ, ຮັບໃຊ້ປະຊາຊົນຢ່າງສຸດອົກສຸດໃຈ ແລະ ສູ້ຊົນຈັດຕັ້ງປະຕິບັດພາລະບົດບາດຂອງຕົນຄື:

### 1. ດ້ານນິຕິບັນຍັດ

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການຈັດຕັ້ງປະຕິບັດນະໂຍບາຍປ່ຽນແປງໃໝ່ຂອງພັກເຮົາ ແລະ ປະຕິບັດຕາມສິດ, ໜ້າທີ່ດ້ານນິຕິບັນຍັດ, ສະພາແຫ່ງຊາດ ໄດ້ຮັບຮອງເອົາລັດຖະທຳມະນູນສະບັບທຳອິດຂອງສປປລາວແລະໄດ້ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ, ສະບັບເລກທີ 55/ປທປທ, ລົງວັນທີ 15 ສິງຫາ 1991, ເຊິ່ງລັດຖະທຳມະນູນສະບັບດັ່ງກ່າວ ແມ່ນເປັນການຮັບຮູ້ຜົນງານອັນໃຫຍ່ຫຼວງທີ່ປະຊາຊົນເຮົາຍາດມາໄດ້ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ປົກປັກຮັກສາ ແລະ ສ້າງສາປະເທດຊາດ ທັງແມ່ນໝາກຜົນລວມຍອດແຫ່ງສະຕິປັນຍາຂອງປະຊາຊົນໃນທົ່ວປະເທດ, ສ່ອງແສງເຖິງເຈດຈຳນົງ ແລະ ຄວາມຕັດສິນໃຈອັນສູງສົ່ງຂອງປະຊາຊົນລາວທັງຊາດ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ພ້ອມກັນສູ້ຊົນເພື່ອບັນລຸຈຸດໝາຍສ້າງປະເທດລາວໃຫ້ເປັນປະເທດ ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ ແລະ ວັດທະນະຖາວອນ.

ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນແຕ່ລະໄລຍະ, ຜ່ານມາ ລັດຖະທຳມະນູນ ແຫ່ງ ສປປລາວ ໄດ້ຮັບການປັບປຸງ 2 ຄັ້ງ (ປີ 2003 ແລະ 2015) ແລະ ຄັ້ງທີ 3 ກຳລັງດຳເນີນຢູ່ໃນປັດຈຸບັນນີ້. ບັນດາອົງການລັດໄດ້ເປັນເຈົ້າການຜັນຂະຫຍາຍລັດຖະທຳມະນູນ ອອກເປັນບັນດາກົດໝາຍ ແລະ ສະພາແຫ່ງຊາດ ໄດ້ພິຈາລະນາຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍໄດ້ທັງໝົດ 180 ສະບັບ ເຊິ່ງລວມມີກົດໝາຍຂົງເຂດປົກຄອງ ແລະ ຍຸຕິທຳ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຂົງເຂດເສດຖະກິດ, ຂົງເຂດວັດທະນະທຳ-ສັງຄົມ ແລະ ຂົງເຂດການຕ່າງປະເທດ.

### 2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

ສະພາແຫ່ງຊາດ ໄດ້ປະຕິບັດສິດ, ໜ້າທີ່ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມທີ່ໄດ້ກຳນົດໃນລັດຖະທຳມະນູນ ແລະ ກົດໝາຍ ໂດຍພິຈາລະນາ, ຮັບຮອງເອົາແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂະໜາດໃຫຍ່, ແຜນງົບປະມານແຫ່ງລັດ, ແຜນເງິນຕາ, ການດັດແກ້ແຜນງົບປະມານແຫ່ງລັດແລະດັດແກ້ແຜນການລົງທຶນຂອງລັດ; ພິຈາລະນາຮັບຮອງເອົາປະທານ ແລະ ຮອງປະທານປະເທດ; ໂຄງປະກອບກົງຈັກ ແລະ ບຸຄະລາກອນຂອງສະພາແຫ່ງຊາດ, ລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ ແລະ ອົງການກວດສອບແຫ່ງລັດ; ໄດ້ຮັບຮອງເອົາການສ້າງຕັ້ງແຂວງໄຊສົມບູນ, ຊື່ເອີ້ນ ແລະ ກຳນົດຈຳນວນຊົນເຜົ່າໃນ ສປປລາວ ມີ 50 ຊົນເຜົ່າ (ໂດຍຈັດຕາມ 4 ໝວດພາສາຄື: ໝວດພາສາລາວ-ໄຕ, ໝວດພາສາມອນ-ຂະແມ, ໝວດພາສາມົ້ງ-ອິ້ວມຽນ ແລະ ໝວດພາສາຈີນ-ຕິເບດ) ແລະ ພິຈາລະນາ, ຮັບຮອງເອົາການເຄື່ອນໄຫວວຽກງານຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດກາແຫ່ງລັດ, ອົງການກວດສອບແຫ່ງລັດ ແລະ ການເຄື່ອນໄຫວວຽກງານສະພາແຫ່ງຊາດ ແລະພິຈາລະນາຮັບຮອງເອົາບັນຫາສຳຄັນອື່ນໆ.



### 3. ດ້ານການຕິດຕາມກວດກາຂອງສະພາແຫ່ງຊາດ

ສະພາແຫ່ງຊາດ ໄດ້ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕິດຕາມກວດກາຂອງຕົນ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍ ເປັນຕົ້ນການຕິດຕາມກວດກາການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລະດັບຊາດ, ໂຄງການຂະໜາດໃຫຍ່; ຕິດຕາມກວດກາການປະຕິບັດສິດ, ໜ້າທີ່ຕາມກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ, ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ, ຂອງອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ຜູ້ພິພາກສາ, ອົງການສືບສວນ-ສອບສວນ, ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ; ຄົ້ນຄວ້າ, ພິຈາລະນາແລະແກ້ໄຂຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນຕາມສິດ, ໜ້າທີ່ ຂອງຄະນະປະຈຳສະພາແຫ່ງຊາດ ເຊິ່ງໄດ້ກຳນົດໃນກົດໝາຍ.

### 4. ການສ້າງຕັ້ງສະພາປະຊາຊົນຂັ້ນແຂວງ

ສະພາຂັ້ນທ້ອງຖິ່ນ ກໍເຄີຍມີການເຄື່ອນໄຫວໃນຊຸມປີ1970, ແຕ່ຕໍ່ມາໄດ້ຢຸດຕິການເຄື່ອນໄຫວ ຈົນມາຮອດການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ VIII ໃນປີ 2016 ຈຶ່ງມີສະພາປະຊາຊົນຂັ້ນແຂວງ ເຊິ່ງມາຮອດປັດຈຸບັນກໍເປັນສະພາປະຊາຊົນຂັ້ນແຂວງ ຊຸດທີ II.

### 5. ດ້ານການເຄື່ອນໄຫວວຽກງານການຕ່າງປະເທດ

ໃນໄລຍະທີ່ຜ່ານມາ, ສະພາແຫ່ງຊາດ ໄດ້ຕັ້ງໜ້າເຄື່ອນໄຫວວຽກງານການຕ່າງປະເທດຂອງຕົນ ທັງໃນຂອບການພົວພັນຮ່ວມມືແບບສອງຝ່າຍແລະຫຼາຍຝ່າຍ ດັ່ງນີ້:

ການພົວພັນຮ່ວມມືແບບສອງຝ່າຍ: ສະພາແຫ່ງຊາດ ໄດ້ມີການພົວພັນຮ່ວມມືກັບລັດຖະສະພາບັນດາປະເທດໃນພາກພື້ນ ແລະ ສາກົນ ທັງໝົດ 30 ກວ່າປະເທດ ໂດຍໄດ້ແລກປ່ຽນການຢ້ຽມຢາມສັນຖະວະໄມຕີຂອງລະດັບການນຳຂັ້ນສູງ ແລະ ຄະນະຜູ້ແທນຂັ້ນຕ່າງໆ; ສ້າງຕັ້ງຄະນະມິດຕະພາບກັບບັນດາລັດຖະສະພາປະເທດເພື່ອນມິດ 30 ກວ່າປະເທດ, ໄດ້ລົງນາມບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືສອງຝ່າຍກັບສະພາແຫ່ງຊາດຫວຽດນາມ, ສປຈີນ, ກູບາ, ກຳປູເຈຍ, ລັດເຊຍ, ມົງໂກລີ, ສ.ເກົາຫຼີ, ເບລາຣຸດຊີ ແລະ ອາຣັບ ເອມີເຣດ.

ການພົວພັນຮ່ວມມືແບບຫຼາຍຝ່າຍ: ສະພາແຫ່ງຊາດ ໄດ້ເຂົ້າເປັນສະມາຊິກ ແລະ ເຂົ້າຮ່ວມເຄື່ອນໄຫວຢູ່ໃນອົງການຈັດຕັ້ງລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນ 11 ອົງການ ແລະ 2ເວທີປຶກສາຫາລື, ໄດ້ເປັນເຈົ້າພາບຈັດກອງປະຊຸມອົງການລັດຖະສະພາພາກພື້ນ, ສາກົນເຊັ່ນ: ກອງປະຊຸມໃຫຍ່ປະຈຳປີໃນຂອບຂອງສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຄັ້ງທີ 26, ຄັ້ງທີ 35 ແລະ ຄັ້ງທີ 45 (ປີ 2024), ກອງປະຊຸມເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ ຄັ້ງທີ 17 ແລະ ກອງປະຊຸມການເປັນຄູ່ຮ່ວມລັດຖະສະພາອາຊີ-ເອີຣົບ ຄັ້ງທີ 7 ແລະ ອື່ນໆອີກຈຳນວນໜຶ່ງ.

ພິເສດ, ສະພາແຫ່ງຊາດລາວ ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອຈາກ ສສ.ຫວຽດນາມ ໂດຍຜ່ານສະພາແຫ່ງຊາດ ແຫ່ງ ສສ.ຫວຽດນາມ ໃນການກໍ່ສ້າງຕຶກອາ ຄານຫ້ອງວ່າການສະພາແຫ່ງຊາດ ແລະ ຫໍສະພາແຫ່ງຊາດຫຼັງໃໝ່ ເຊິ່ງເປັນຂອງຂວັນອັນລ້ຳຄ່າທີ່ພັກ, ລັດ ແລະ ປະຊາຊົນຫວຽດນາມ ໄດ້ມອບໃຫ້ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ເຊິ່ງເປັນສັນຍະລັກແຫ່ງສາຍພົວພັນອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ.

ສະຫຼຸບສັງລວມໄດ້ວ່າ: ໃນໄລຍະ 49 ປີທີ່ຜ່ານມາ, ສະພາແຫ່ງຊາດ ໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ສາມາດເຮັດຫຼ້ອນພາລະກຳປະຫວັດສາດອັນມີກຽດສະຫງ່າງາມທີ່ພັກ ແລະ ປະຊາຊົນມອບໝາຍ, ໄດ້ປະກອບສ່ວນຢ່າງສົມກຽດເຂົ້າໃນຜົນງານລວມແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດຕາມເສັ້ນທາງກ້າວຂຶ້ນສັງຄົມນິຍົມ, ປະກອບສ່ວນຍົກສູງບົດບາດອິດທິພົນຂອງພັກ, ລັດ ແລະ ຊາດລາວເຮົາໃນເວທີພາກພື້ນ ແລະ ສາກົນຢ່າງຕໍ່ເນື່ອງ.

ຜ່ານການເຄື່ອນໄຫວວຽກງານໃນໄລຍະ 49 ປີຜ່ານມາ, ສະພາແຫ່ງຊາດ ໄດ້ຮັບການຍ້ອງຍໍປະເຜດຕ່າງໆດັ່ງນີ້:

ເນື່ອງໃນໂອກາດສະເຫຼີມສະຫຼອງການສະຖາປະນາ ສປປ ລາວ ຄົບຮອບ 30 ປີ (1975-2005) ສະພາແຫ່ງຊາດ ໄດ້ຮັບຫຼຽນໄຊອິດສະຫຼະຊັ້ນI ຈຳນວນ 1 ໜ່ວຍ;

ເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງສະພາແຫ່ງຊາດ ຄົບຮອບ 45 ປີ (1975-2020) ສະພາແຫ່ງຊາດຊຸດທີ VIII ໄດ້ຮັບ "ຫຼຽນຄຳແຫ່ງຊາດ" ຈຳນວນ 1 ໜ່ວຍ;

ນອກຈາກນັ້ນແລ້ວ, ບັນດາທ່ານການນຳແລະສະມາຊິກສະພາແຫ່ງຊາດ ໃນຫຼາຍຊຸດຜ່ານມາກໍໄດ້ຮັບການຍ້ອງຍໍປະເຜດຕ່າງໆ: ຫຼຽນໄຊ, ຫຼຽນກາ ແລະ ໃບຍ້ອງຍໍ ຈາກການຈັດຕັ້ງພາຍໃນແລະຕ່າງປະເທດຈຳນວນໜຶ່ງ.

ໃນຊຸມປີຕໍ່ໜ້ານີ້, ສະພາແຫ່ງຊາດຍັງມີພາລະກຳປະຫວັດສາດອັນໜັກໜ່ວງ ແຕ່ມີກຽດສະຫງ່າງາມ, ພວກເຮົາຈະຕ້ອງພ້ອມກັນສູ້ຊົນເຮັດລ້ອນໜ້າທີ່ຂອງສະພາແຫ່ງຊາດຊຸດທີ IX ແລະ ກະກຽມໃຫ້ແກ່ການເລືອກຕັ້ງສະພາແຫ່ງຊາດຊຸດທີX ເພື່ອສືບຕໍ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ພາປວງຊົນລາວທັງຊາດກ້າວເດີນຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມ. ປັດຈຸບັນ, ໃນເງື່ອນໄຂທີ່ພວກເຮົາປະສົບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຫວັງວ່າບັນດາທ່ານສະມາຊິກສະພາແຫ່ງຊາດ ຈະສືບຕໍ່ມີສ່ວນຮ່ວມໃນການສ້າງລັດນິຕິທຳທີ່ເຂັ້ມແຂງ, ປົກຄອງດ້ວຍກົດໝາຍ, ນຳເອົາຄວາມຍຸຕິທຳມາສູ່ປະຊາຊົນລາວບັນດາເຜົ່າ ແລະ ພ້ອມກັນສ້າງຜົນງານຂໍ່ານັບຮັບຕ້ອນ 3 ວັນປະຫວັດສາດ ແລະ ວັນຄົບຮອບ 50 ປີຂອງສະພາແຫ່ງຊາດລາວ.

## ຜູ້ປະກອບການ...

(ຕໍ່ຈາກໜ້າ 3)

ຖືກຮັບຮອງ ແລະ ປະກາດໃຊ້ ຄາດຄະເນວ່າຈະໄດ້ຮັບຜົນດັ່ງນີ້: 1. ໄດ້ຜັນຂະຫຍາຍແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ອອກເປັນຍຸດທະສາດການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ; 2. ສາມາດກຳນົດແບ່ງປະເພດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ 4.5 ລ້ານເຮັກຕາ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດໃນລະດັບມະຫາພາກແລະຈຸລະພາກ ເຊິ່ງເປັນບ່ອນອີງໃຫ້ແກ່ຂະແໜງການແລະທ້ອງຖິ່ນ ໄດ້ນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຕົນ ແລະ ມີການຄຸ້ມຄອງ, ນຳໃຊ້ຢ່າງມີປະສິດທິຜົນ; 3. ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງປະເທດ ໂດຍສະເພາະແມ່ນພື້ນທີ່ດິນສຳລັບການຜະລິດຄໍ້າປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ; 4. ສາມາດກຳນົດມາດຕະການ, ກົນໄກແລະການປະສານງານກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີຄວາມຊັດເຈນ ແລະ ຈະແຈ້ງຂຶ້ນ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນດີ; 5. ຜູ້ປະກອບການແລະນັກລົງທຶນສາມາດເຂົ້າເຖິງຂໍ້ມູນທີ່ດິນກະສິກຳຜ່ານລະບົບເອເລັກໂຕຣນິກ; 6. ເປັນບ່ອນອີງໃນການນຳສະເໜີຕໍ່ຜູ້ໃຫ້ທຶນ ແລະ ນັກລົງທຶນທີ່ມີຄວາມສົນໃຈວຽກງານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳໃນຕໍ່ໜ້າ; 7. ນັກວິຊາການ ແລະ ພື້ນຖານໂຄງລ່າງກະສິກຳ ຈະໄດ້ຮັບການສ້າງ ແລະ ປັບປຸງຍົກລະດັບໃຫ້ມີຄຸນນະພາບຕາມແຜນທີ່ກຳນົດໄວ້.




# ຄິດຮອດ ສ.ອ.ຈ

# ດົ້ນກົບເມກ

ຜູ້ຂຽນພຽງຢາກທົບທວນຄືນບາງປະເດັນໃນເນື້ອໃນເອກະສານມະຕິ 04 ຂອງກົມການເມືອງສູນກາງພັກ ວ່າດ້ວຍເສດຖະກິດເອກະລາດ ເປັນເຈົ້າຕົນເອງ ທີ່ຢູ່ໃນເອກະສານດັ່ງກ່າວ ເພິ່ນຂຽນຫຍໍ້ວ່າ: ສ.ອ.ຈ ເຊິ່ງຢູ່ຫຼັງປົກຂອງເອກະສານ ເພິ່ນໃຫ້ນິຍາມສັ້ນໆວ່າ: ເສດຖະກິດເອກະລາດເປັນເຈົ້າຕົນເອງ ໝາຍເຖິງເສດຖະກິດຂອງປະເທດໜຶ່ງ ທີ່ມີຄວາມພະຍາຍາມອອກຈາກລະບົບເສດຖະກິດເພິ່ງພາ ແລະ ເອື່ອຍອີງ ໃຫ້ກາຍເປັນເຈົ້າຕົນເອງຢ່າງໜັກແໜ້ນ ເຊິ່ງເອກະສານດັ່ງກ່າວມີພຽງ 22 ໜ້າ, ໜ້າທີ 3 ເພິ່ນໄດ້ເວົ້າວ່າ ການແກ້ໄຂຄວາມຫຍຸ້ງຍາກເສດຖະກິດ-ການເງິນແມ່ນອີງໃສ່ 3 ຫຼັກການຄື: ຄວາມເຂັ້ມງວດ, ເດັດຂາດ ແລະ ຄວາມໂປ່ງໃສຢ່າງຈິງຈັງ.

ເອກະສານໜ້າທີ 8 ໄດ້ອະທິບາຍວ່າ ຢາກເຮັດໃຫ້ ສ.ອ.ຈ ສຳເລັດ ຕ້ອງສ້າງຄວາມເປັນເຈົ້າຂອງ ຄວາມຮັບຮູ້ໃນສິ່ງທີ່ເຮົາມີ ເຮົາເຮັດໄດ້, ຮູ້ອີງໃສ່ທ່າແຮງບົ່ມຊ້ອນ, ຮູ້ນຳໃຊ້ຊັບພະຍາກອນທີ່ມີຢ່າງກຸ້ມຄ່າ, ຮູ້ຕໍ່ຍອດ, ສ້າງມູນຄ່າເພີ່ມເລື້ອຍໆ ແລະ ສ.ອ.ຈ ບໍ່ໝາຍຄວາມວ່າ ອັນໃດກໍໃຫ້ເຮັດເອງ-ອັນໃດກໍໃຫ້ມີເປັນຂອງຕົນເອງ ສ.ອ.ຈ ຕ້ອງຮູ້ເຂົາ-ຮູ້ເຮົາດີ ແລະ ຢ່າງເລິກເຊິ່ງ ສ.ອ.ຈ ເນັ້ນການນຳໃຊ້ຊັບພະຍາກອນທີ່ມີຢູ່ຂອງຊາດ-ເນັ້ນນຳໃຊ້ທ່າແຮງບົ່ມຊ້ອນ, ຮູ້ຫາເງິນດ້ວຍມັນສະໝອງຂອງຕົນ, ຮູ້ຫາເງິນດ້ວຍການນຳໃຊ້ຊັບພະຍາກອນຢ່າງກຸ້ມຄ່າ ຍ້ອນວ່າເຮົາໄດ້ເງິນມາຈາກສິ່ງໜຶ່ງຈະໄປພັດທະນາສິ່ງອື່ນໃຫ້ກັບມາມີຄຸນຄ່າໃຫຍ່ກວ່າເກົ່າ ເປັນປະໂຫຍດແກ່ການພັດທະນາກວ່າເກົ່າ-ສິ່ງຕອບແທນດີກວ່າເກົ່າ... ນີ້ຄືເປົ້າໝາຍຂອງ ສ.ອ.ຈ.

ຜູ້ຂຽນຢາກເອີ່ຍເຖິງຊື່ນະໂຍບາຍປະຢັດຕື່ມ ເພາະການສ້າງ ສ.ອ.ຈ ໄດ້ ກໍຍັງອາໄສການປະຢັດເປັນໄມ້ງັດຄູ່ກັນໄປ ຈຶ່ງຂໍມີຄຳເຫັນວ່າ ການປະຢັດຈະເກີດຂຶ້ນຢ່າງແທ້ຈິງໄດ້ຕ້ອງອາໄສແບບຢ່າງອາໄສບົດຮຽນຕົວຈິງ, ຄວາມເຊື່ອໝັ້ນ ແລະ ສັດທາຂອງມະຫາຊົນກໍຈະເກີດຕາມມາ ເຊິ່ງຂໍຍົກທຽບໃສ່ບົດຮຽນໃນພຸດທະສາສະໜາ ຕົວຢ່າງ ການປະພຶດຂອງພະພຸດທະເຈົ້າ ເພິ່ນເຄີຍສອນວ່າ: ຍະຖາວາທີ ຕະຖາກາລີ; ຍະຖາກາລີ ຕະຖາວາທີ; ພະພຸດທະເຈົ້າ ໄດ້ພິສູດຢັ້ງຢືນແລ້ວວ່າ ພະອົງເວົ້າແນວໃດກໍປະພຶດແນວນັ້ນ ແລະ ປະພຶດແນວໃດ ກໍເວົ້າແນວນັ້ນ ຕ່າງກັບ ແມ່ປູ ສອນລູກປູ ນິທານຂອງລາວເຮົານໍ.






# ວິທີເຮັດວຽກ

### ພາກທີ 7
### ບັນຫາພະນັກງານ

ພະນັກງານສ່ວນຫຼາຍແມ່ນກຳມະກອນ ແລະ ຊາວໄຮ່ນາ ວັດທະນະທຳຍັງຕ່ຳ. ພັກຍັງບໍ່ທັນຊອກຫາທຸກວິຖີທາງເພື່ອຍົກຍໍລະດັບຄວາມຮູ້ດ້ານວັດທະນະທຳຂອງເຂົາເຈົ້າຂຶ້ນໃຫ້ສູງ.

ການອົບຮົມທິດສະດີໃຫ້ແກ່ພະນັກງານຊັ້ນສູງນັ້ນ ມາຮອດດຽວນີ້ຍັງບໍ່ທັນໄດ້ເຮັດ ຫຼື ເຮັດກໍຍັງບໍ່ທັນຖືກ, ທິດສະດີ ແລະ ສະພາບຄວາມຈິງຍັງບໍ່ທັນເຂົ້າເກຍກັນ ຍັງສອນຕາມວິທີຮຽນຂຶ້ນໃຈກັບປາກ.

ກ) ການອົບຮົມວິຊາຊີບ: ຕ້ອງປະຕິບັດຄຳຂວັນທີ່ວ່າ "ເຮັດວຽກອັນໃດຕ້ອງຮຽນອັນນັ້ນ". ບໍ່ວ່າຈະຢູ່ໃນພະແນກການທະຫານ, ການເມືອງ, ເສດຖະກິດ, ວັດທະນະທຳ, ຈັດຕັ້ງໂຄສະນາສັນຕິລາດ ຫຼື ອື່ນໃດກໍຕາມ, ພະນັກງານເຮັດການຢູ່ໃນພະແນກໃດຕ້ອງຮຽນໃຫ້ຮູ້ຄັກວຽກການໃນພະແນກນັ້ນ. ສຳນັກງານຕ່າງໆທີ່ມີໜ້າທີ່ນຳພາ ແລະ ຜູ້ທີ່ຮັບຜິດຊອບສຳນັກງານເຫຼົ່ານັ້ນຕ້ອງມີແຜນການສອນໃຫ້ພະນັກງານໃນພະແນກຂອງຕົນ ໂດຍໃຫ້ອົງການຈັດຕັ້ງຂອງພັກໃນຊັ້ນຕ່າງໆຊ່ວຍເຫຼືອເຮັດ, ວິທີຮຽນນັ້ນລວມມີ 5 ວິຊາຄື:

ອ່ານຕໍ່ສະບັບໜ້າ...



## ຄວາມຄືບໜ້າ...

(ຕໍ່ຈາກໜ້າ 1)

ລະດັບຊາດ ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງທັງຢູ່ສູນກາງ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມ (15 ວຽກງານ) ໃນການປັບປຸງທີ່ໄດ້ສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອ 7 ສຳເລັດເປັນສ່ວນໃຫຍ່ ເຊິ່ງສະແດງອອກຄື:

1. ດຳເນີນກອງປະຊຸມການປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນປີ2015 ໃນຂອບເຂດທົ່ວປະເທດເປັນຄັ້ງທຳອິດເຊິ່ງມີພະນັກງານນຳພາ-ຄຸ້ມຄອງຂັ້ນກະຊວງ-ອົງການຢູ່ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງກໍຄືມະຫາວິທະຍາໄລຕ່າງໆ, ບັນດາວິທະຍາຄານຂອງກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ, ສະພາການຄ້າ ແລະ ອຸດສາຫະກຳ ເຂົ້າຮ່ວມທັງໝົດ 13,039 ທ່ານ, ຍິງ 2,290 ທ່ານ ເຊິ່ງເປັນບັ້ນໃຫຍ່ບັ້ນໜຶ່ງໃນການປັບປຸງຄວາມຮັບຮູ້, ຄວາມເຂົ້າໃຈຕໍ່ລັດຖະທຳມະນູນ ແລະ ກວດກາຕີລາຄາການຈັດຕັ້ງປະຕິບັດລັດຖະທຳມະນູນໃນທົ່ວລະບົບການເມືອງ; ໃນບັ້ນນີ້, ບັນດາທ່ານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກໍຄືຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໂດຍສະເພາະບັນດາທ່ານປະທານ, ຮອງປະທານສະພາປະຊາຊົນຂັ້ນແຂວງ ໄດ້ເປັນເຈົ້າການ ແລະ ຍົກສູງຄວາມຮັບຜິດຊອບໃນການນຳພາ-ຊີ້ນຳການດຳເນີນກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດລັດຖະທຳມະນູນດັ່ງກ່າວ ຢູ່ແຂວງຂອງຕົນ ແລະ ນະຄອນຫຼວງວຽງຈັນ ສຳເລັດຜົນເປັນຢ່າງດີ.

2. ເປີດໂອກາດໃຫ້ມີການປະກອບຄຳເຫັນຢ່າງກວ້າງຂວາງຂອງບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງຜ່ານທາງສື່ຕ່າງໆ ເປັນຕົ້ນຜ່ານທາງອີເມວຂອງຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ແລະ ເວັບໄຊຂອງສະພາແຫ່ງຊາດ ໂດຍຕິດພັນກັບການຈັດຕັ້ງປາຖະກະຖາ, ໂຄສະນາເຜີຍແຜ່ ແລະ ສະເຫຼີມສະຫຼອງວັນລັດຖະທຳມະນູນແຫ່ງຊາດ ຄົບຮອບ 33 ປີ ເຊິ່ງໄດ້ສ້າງໂອກາດໃຫ້ປະຊາຊົນບັນດາຊັ້ນຄົນແລະເຜົ່າຕ່າງໆ ໄດ້ທວນຄືນເຖິງລັດຖະທຳມະນູນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕື່ມອີກເທື່ອໜຶ່ງ.

3. ຄົ້ນຄວ້າ ແລະ ຍາດແຍ່ງເອົາບົດຮຽນການປັບປຸງລັດຖະທຳມະນູນຈາກປະເທດຕ່າງໆ ຈຳນວນໜຶ່ງ ເປັນຕົ້ນບັນດາປະເທດເພື່ອນມິດຍຸດທະສາດ ໃນນີ້, ໄດ້ເຊື້ອເຊີນຄະນະຜູ້ແທນຂັ້ນສູງຈາກສະພາແຫ່ງຊາດ ສສ. ຫວຽດນາມ ມາສຳມະນາວິທະຍາສາດຮ່ວມກັບສະພາແຫ່ງຊາດ ສປປລາວ ກ່ຽວກັບແນວຄິດຊີ້ນຳຂອງພັກກອມມູນິດຫວຽດນາມ ແລະ ແນວຄິດຊີ້ນຳຂອງປະທານ ໄກສອນ ພົມວິຫານ ຕໍ່ກັບການສ້າງ ແລະ ປັບປຸງລັດຖະທຳມະນູນ ໂດຍໄດ້ແລກປ່ຽນບົດຮຽນເຊິ່ງກັນແລະກັນ ກ່ຽວກັບການປັບປຸງລັດຖະທຳມະນູນຂອງທັງສອງປະເທດ.

4. ສະຫຼຸບຕີລາຄາຜົນການປະເມີນການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະສັງລວມຂໍ້ສະເໜີຕ່າງໆໃນທົ່ວປະເທດຕໍ່ການປັບປຸງເນື້ອໃນຂອງລັດຖະທຳມະນູນ; ດຳເນີນການຄົ້ນຄວ້າ, ວິໄຈ ແລະ ປັບປຸງເນື້ອໃນຂອງລັດຖະທຳມະນູນສະບັບຮ່າງເບື້ອງຕົ້ນ ແລ້ວນຳສະເໜີຂໍທິດຊີ້ນຳຈາກກອງປະຊຸມຄະນະປະຈຳສະພາແຫ່ງຊາດ 2 ຄັ້ງ, ກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ 2 ຄັ້ງ ເຊິ່ງໃນແຕ່ລະຄັ້ງ ກໍໄດ້ປັບປຸງຮ່າງລັດຖະທຳມະນູນ ແລ້ວຈຶ່ງນຳສະເໜີຂໍທິດຊີ້ນຳຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ຄັ້ງທີ 9 ສະໄໝທີ XI ໃນວັນທີ 01 ພະຈິກຜ່ານມາ. ຜ່ານການຄົ້ນຄວ້າແລະປະກອບຄວາມເຫັນຢ່າງຫຼາກຫຼາຍຂອງກອງປະຊຸມດັ່ງກ່າວ, ສູນກາງພັກໄດ້ມີທິດຊີ້ນຳຕໍ່ການປັບປຸງລັດຖະທຳມະນູນປີ 2015 ດັ່ງນີ້:

1) ແນໃສ່ການປັບປຸງລະບົບອຳນາດແຫ່ງລັດໃຫ້ມີປະສິດທິພາບສູງ, ສ້າງບາດລ້ຽວໃໝ່ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ, ການເຊື່ອມໂຍງເສດຖະກິດພາກພື້ນ ແລະສາກົນ ແນໃສ່ສ້າງພື້ນຖານທາງດ້ານກົດໝາຍ ກໍຄືນິຕິກຳທີ່ຈະວາງອອກໃນຕໍ່ໜ້າ ໃຫ້ຮັບປະກັນແນວທາງການເມືອງຂອງພັກ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່.

2) ການປັບປຸງລັດຖະທຳມະນູນຄັ້ງນີ້ ຕົ້ນຕໍແມ່ນສຸມໃສ່ປັບປຸງບາງໝວດ, ບາງມາດຕາ ເພື່ອຮັບປະກັນ ຫຼື ຮອງຮັບແນວທາງການເມືອງຂອງພັກ ແລະແນວທາງການຈັດຕັ້ງ, ການຄຸ້ມຄອງ-ບໍລິຫານລັດໃນໄລຍະໃໝ່ ກໍຄືແນວທາງປ່ຽນແປງໃໝ່ໃນຊຸມປີຕໍ່ໜ້າ ໂດຍສະເພາະໃນສະໄໝທີ XII ຂອງພັກ ຫາກບໍ່ແມ່ນການປັບປຸງທັງໝົດເນື້ອໃນຂອງລັດຖະທຳມະນູນ; ໝາຍວ່າ ອັນໃດທີ່ເຂົ້າໃຈເປັນເອກະພາບ, ປະຕິບັດມີປະສິດທິຜົນ, ບໍ່ມີຄວາມສັບສົນ ຫຼື ເປັນບັນຫາຫຍຸ້ງຍາກໃນການຈັດຕັ້ງປະຕິບັດ ກໍບໍ່ຈຳເປັນຕ້ອງປັບປຸງຕື່ມອີກ.

3) ການປັບປຸງລັດຖະທຳມະນູນ ຕ້ອງມີເນື້ອໃນສອດຄ່ອງກັບບັນດາເນື້ອໃນຂອງໂຄງການການເມືອງຂອງພັກສະບັບທີ 3, ຮ່າງລາຍງານການເມືອງທີ່ຈະສະເໜີຕໍ່ກອງປະຊຸມໃຫຍ່ສະໄໝທີ XII ຂອງພັກ, ມະຕິ 05/ຄບສພ, ມະຕິ 04/ກມສພ ແລະ ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ເລກທີ 173/ຄລສພ ໂດຍສະເພາະບັນຫາບົດບາດພັກເປັນແກນນຳ, ບັນຫາຈຸດໝາຍສັງຄົມນິຍົມ, ບັນຫາເສດຖະກິດເອກະລາດເປັນເຈົ້າຕົນເອງ, ບັນຫາການແບ່ງຂັ້ນຄຸ້ມຄອງ, ການກຳນົດຊື່ອື່ນຕ່າງໆຕ້ອງປັບປຸງໄປລວງດຽວກັນ.

ສຳລັບທິດທາງວຽກງານໃນຕໍ່ໜ້າ, ສືບຕໍ່ປັບປຸງຮ່າງລັດຖະທຳມະນູນຕາມຄຳເຫັນຂອງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລ້ວນຳເອົາຮ່າງດັ່ງກ່າວລົງທາບທາມຄຳເຫັນທາງກວ້າງ ແລະ ທາງເລິກ; ປັບປຸງ, ຮຽບຮຽງເນື້ອໃນຂອງຮ່າງລັດຖະທຳມະນູນໃຫ້ເປັນສະບັບສົມບູນ ເພື່ອນຳສະເໜີຂໍທິດຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ ແລະ ກົມການເມືອງສູນກາງພັກ; ນຳສະເໜີຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງ ສພຊ ຊຸດທີ IX ພິຈາລະນາຮັບຮອງເອົາ ແລະ ປະກາດໃຊ້ (ສະເໜີໃຫ້ມີກອງປະຊຸມສະໄໝວິສາມັນເທື່ອທີ 2 ໃນທ້າຍເດືອນມີນາ ຫຼືຕົ້ນເດືອນເມສາ 2025 ພິຈາລະນາຮັບຮອງລັດຖະທຳມະນູນແລະບາງກົດໝາຍທີ່ມີຄວາມຈຳເປັນ ແລະ ຮີບດ່ວນ).

## ຊຸກຍູ້...

(ຕໍ່ຈາກໜ້າ 1)

IX ເມື່ອວັນທີ 21 ພະຈິກ 2024; ໂດຍອີງໃສ່ມະຕິເລກທີ 02/ສພຊ, ວຽກງານ 3 ສ້າງ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງກວ້າງຂວາງ, ກອງປະຊຸມສະໄໝສາມັນເທື່ອທີ 8 ກໍໄດ້ຍັ້ງຢືນ ແລະ ຮັບຮອງເອົາການສະຫຼຸບສັງລວມຜົນສຳເລັດແລະບັນຫາທີ່ຍັງຄົງຄ້າງ ພ້ອມທັງທິດທາງ, ແຜນການ ແລະຄາດໝາຍສູ້ຊົນຂອງລັດຖະບານ ໃນປີ 2025 ແລະ ທິດທາງ 5 ປີ (2026-2030).

**ດ້ານຜົນສຳເລັດ:**

1. ໄດ້ສ້າງຕັ້ງສະພາປະຊາຊົນຂັ້ນແຂວງ ເຊິ່ງແມ່ນອົງການຕົວແທນແຫ່ງສິດແລະຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າແລະເປັນອົງການອຳນາດລັດຂັ້ນທ້ອງຖິ່ນ ມີສິດແລະໜ້າທີ່ລວມຄື: ສິດ ແລະ ໜ້າທີ່ດ້ານນິຕິກຳ, ສິດ ແລະ ໜ້າທີ່ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ, ສິດ ແລະ ໜ້າທີ່ດ້ານການຕິດຕາມກວດກາ; ສຳເລັດການປະກາດສ້າງຕັ້ງ 3 ນະຄອນຄື: ນະຄອນຫຼວງພະບາງ, ນະຄອນໄກສອນ ພົມວິຫານ ແລະ ນະຄອນປາກເຊ; ບັນດາກະຊວງ, ອົງການ ກໍໄດ້ຄົ້ນຄວ້າສ້າງ ແລະ ປັບປຸງບັນດານິຕິກຳເພື່ອໃຫ້ສອດຄ່ອງ ແລະ ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດວຽກງານ 3 ສ້າງ ໃນຂົງເຂດຄວາມຮັບຜິດຊອບຂອງຕົນ.

2. ສ້າງແຂວງເປັນຫົວໜ່ວຍຍຸດທະສາດ ຕາມ 7 ດ້ານ ແລະ 66 ຕົວຊີ້ບອກ ບັນລຸໄດ້ 1 ນະຄອນຫຼວງ ແລະ 2 ແຂວງ ຄື: ນະຄອນຫຼວງວຽງຈັນ, ແຂວງສະຫວັນນະເຂດ ແລະ ແຂວງຈຳປາສັກ.

3. ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ຕາມ 5 ດ້ານ ແລະ 47 ຕົວຊີ້ບອກ ບັນລຸໄດ້ 3 ນະຄອນ ແລະ 21 ເມືອງ.

4. ສ້າງບ້ານເປັນຫົວໜ່ວຍພັດທະນາ ຕາມ 4 ດ້ານ ແລະ 30 ຕົວຊີ້ບອກ ບັນລຸໄດ້ 3,618 ບ້ານ.

ເຖິງຢ່າງໃດກໍຕາມ, ຄຽງຄູ່ກັບຜົນງານທີ່ກ່າວມາຂ້າງເທິງ ກອງປະຊຸມເຫັນວ່າຍັງມີດ້ານອ່ອນ-ຄົງຄ້າງຈຳນວນໜຶ່ງ ຈະຕ້ອງໄດ້ສືບຕໍ່ແກ້ໄຂໃນຕໍ່ໜ້າ ເປັນຕົ້ນແມ່ນ:

1. ນິຕິກຳ, ຄຳແນະນຳໃນການຈັດຕັ້ງປະຕິບັດຂອງບາງກະຊວງ, ອົງການຂັ້ນສູນກາງໃນການແບ່ງຂັ້ນຄຸ້ມຄອງ ກຳນົດຍັງມີລັກສະນະກວມລວມ, ບໍ່ລະອຽດຈະແຈ້ງ.

2. ການແບ່ງຂັ້ນຄຸ້ມຄອງດ້ານວຽກງານ, ດ້ານງົບປະມານ, ດ້ານພະນັກງານແລະເຕັກນິກວິຊາການ ໄດ້ກຳນົດຢູ່ໃນນິຕິກຳຂ້ອນຂ້າງຈະແຈ້ງ, ແຕ່ຂອດຈັດຕັ້ງປະຕິບັດຍັງບໍ່ຂາດຕົວ.

3. ການແບ່ງຜົນປະໂຫຍດຂອງຂະແໜງການຂັ້ນສູນກາງໃຫ້ທ້ອງຖິ່ນຍັງບໍ່ທັນສອດຄ່ອງກັບສະພາບຄວາມເປັນຈິງ.

4. ບາງກະຊວງ, ອົງການຂັ້ນສູນກາງ ຍັງບໍ່ທັນເປັນເຈົ້າການໃນການນຳພາ-ຊີ້ນຳ, ບໍ່ໃກ້ຊິດຕິດແທດຂະແໜງການສາຍຕັ້ງຂອງຕົນຢູ່ຂັ້ນທ້ອງຖິ່ນເທົ່າທີ່ຄວນ ຈຶ່ງເຮັດໃຫ້ການເຄື່ອນໄຫວວຽກງານຂອງບາງຂະແໜງການຢູ່ຂັ້ນທ້ອງຖິ່ນ ເກີນໜ້າທີ່ ແລະ ສິດ ທີ່ກົດໝາຍກຳນົດ.

5. ການເຜີຍແຜ່, ເຊື່ອມຊຶມ ແລະການຜັນຂະຫຍາຍມະຕິ, ຄຳສັ່ງ ກ່ຽວກັບວຽກງານ 3 ສ້າງ ຍັງບໍ່ທັນເລິກເຊິ່ງ, ກວ້າງຂວາງແລະທົ່ວເຖິງເທົ່າທີ່ຄວນ.

6. ການປະເມີນຜົນວຽກງານ 3 ສ້າງ ຂອງບາງຂະແໜງການຂັ້ນແຂວງ, ເມືອງ, ນະຄອນ ບໍ່ໄປຕາມຕົວຊີ້ບອກ ແລະ ຕົວຊີ້ບອກທີ່ກ່ຽວຂ້ອງກັບຫຼາຍຂະແໜງການ ມີຄວາມຫຍຸ້ງຍາກໃນການຈັດຕັ້ງປະຕິບັດ; ຄຽງຄູ່ກັນນັ້ນ, ວຽກງານ 3 ສ້າງ ບໍ່ໄດ້ຮັບການຈັດສັນງົບປະມານເປັນອັນສະເພາະ.

ສຳລັບທິດທາງໃນຕໍ່ໜ້າ, ກອງປະຊຸມສະເໜີລັດຖະບານຄົ້ນຄວ້າຕື່ມ ແລະເອົາໃຈໃສ່ຈັດຕັ້ງປະຕິບັດບາງບັນຫາດັ່ງນີ້:

**ທິດທາງ, ແຜນການແລະຄາດໝາຍສູ້ຊົນ ໃນປີ 2025:**

1. ສະຫຼຸບຕີລາຄາ, ຖອດຖອນບົດຮຽນວຽກງານ 3 ສ້າງ, ວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດຮອບດ້ານ ແລະ ແກ້ໄຂຄວາມທຸກຍາກ ຕິດພັນກັບການປັບປຸງລະບົບການປົກຄອງທ້ອງຖິ່ນ ຕາມມະຕິ 05/ຄບສພ, ລົງວັນທີ 05 ກັນຍາ 2023.

2. ຄົ້ນຄວ້າປັບປຸງຄຳແນະນຳກ່ຽວກັບການປະເມີນຜົນສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ຕາມມາດຕະຖານ ແລະ ຕົວຊີ້ບອກ ທີ່ໄດ້ກຳນົດໄວ້.

3. ຊຸກຍູ້ສ້າງແຂວງເປັນຫົວໜ່ວຍຍຸດທະສາດ ໃຫ້ໄດ້ 02 ແຂວງ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ໃຫ້ໄດ້ 04 ເມືອງ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາໃຫ້ໄດ້ 1,086 ບ້ານ.

**ທິດທາງແຜນການ 5 ປີ (2026-2030):**

1. ສູ້ຊົນສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ ຕາມທິດທາງແຜນການທີ່ວາງໄວ້.

2. ສ້າງໃໝ່ ຫຼື ປັບປຸງນິຕິກຳກ່ຽວຂ້ອງກັບວຽກງານ 3 ສ້າງ ຕາມທິດຜັນຂະຫຍາຍມະຕິ ເລກທີ 05/ຄບສພ, ລົງວັນທີ 05 ກັນຍາ 2023 ວ່າດ້ວຍການສືບຕໍ່ຍູ້ແຮງການຜັນຂະຫຍາຍແນວທາງປ່ຽນແປງໃໝ່ເຂົ້າສູ່ລວງເລິກ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນການນຳພາຂອງພັກ.

3. ບັນດາກະຊວງ, ຂະແໜງຂັ້ນສູນກາງ ເພີ່ມທະວີການລົງຕິດຕາມ, ຊຸກຍູ້-ຊີ້ນຳຂັ້ນທ້ອງຖິ່ນ ໃນການຈັດຕັ້ງປະຕິບັດບາງມາດຕະຖານທີ່ມີຄວາມຫຍຸ້ງຍາກ ແລະ ມີຄວາມສ່ຽງຈະບໍ່ບັນລຸ.

4. ບັນດາກະຊວງ, ຂະແໜງການຂັ້ນສູນກາງ ຍົກສູງຄວາມຮັບຜິດຊອບໃນການສ້າງ ແລະ ປັບປຸງນິຕິກຳກ່ຽວກັບການແບ່ງຂັ້ນຄຸ້ມຄອງດ້ານຕ່າງໆ ໃຫ້ເປັນລະບົບຄົບຊຸດ, ຕິດພັນກັບການປັບປຸງກົນໄກການປະສານງານລະຫວ່າງຂັ້ນສູນກາງດ້ວຍກັນ ແລະ ສູນກາງກັບທ້ອງຖິ່ນ.

5. ປັບປຸງຄືນລະບົບການນຳພາ-ຊີ້ນຳວຽກງານກໍ່ສ້າງຮາກຖານການເມືອງ, ວຽກງານພັດທະນາຊົນນະບົດຮອບດ້ານແລະແກ້ໄຂຄວາມທຸກຍາກແລະວຽກງານ 3 ສ້າງ ໃຫ້ກົມກຽວກັນ.

## ອາດ ກະວີລາວ

# ຮັກຊາດ ຮັກບ້ານ

**# ປາຍປາກການ້ອຍ**

❊ ຮັກຊາດຄວນຮັກບ້ານ    ຂານຕໍ່ແນວທາງ
ຮັກຜູ້ນຳຄືນຫານ    ຍ່ອມເສຍສະຫຼະສູ້
ຊູຊ່ວຍກັນແປງສ້າງ    ເຮືອນຊານໃຫ້ເຮືອງຮຸ່ງ
ອະນາໄມຮອບຮູ້    ຂະຫຍັນເລື້ອຍສະອາດຕາ

❊ ຮັກຊາດ ຕ້ອງຮັກບ້ານ    ຖານເຂດເຮືອນຊານຕົນ
ຝຶກຝົນອະນາໄມ    ສິ່ງຂອງເກັບມ້ຽນ
ນອກແລະໃນເຮືອນນັ້ນ    ຫຼືງງາມຕາດູເດັ່ນ
ກາຍທັງໃຈພໍ່າພ້ອມ    ງາມກ້ຽງດັ່ງດຽວ ນັ້ນນາ!

❊ ຢ່າໄດ້ປະປ່ອຍຖິ້ມ    ແນວເນົ່າຍັງຢາຍ
ວາງຂະຊາຍຕາມທາງ    ພໍ່າຖົງຢາງທັງເຈ້ຍ
ທັງຂອງເສຍເຫຼືອໃຊ້    ຫຼວງຫຼາຍໝົດຄ່າ
ພິຈາລະນາແຍກຖິ້ມ    ເກັບມ້ຽນຖືກຖັງ

❊ ຄັນບໍ່ເກັບກອບມ້ຽນ    ວາງເປົ່າປົວໄປ
ແນວເນົ່າມູນເໝັນ    ອື່ມເອືອນສະອານອ້າງ
ບາງອັນຍ່ອຍສະລາຍໄດ້    ນຳໄປເປັນປຸຍຕໍ່
ອັນໃດຍ່ອຍບໍ່ໄດ້    ຈັບໄຈ້ກ່ອນວາງ ທ່ານເອີຍ

❊ ຄັນບໍ່ຊູຊ່ວຍຊວ້ານ    ແຮງຮ່ວມໂຮມກັນ
ຮັກສາອານາໄມ    ຮ່ວມໃຈຊູຊວ້ານ
ຈັບວາງກວດເກັບມ້ຽນ    ຂອງເສຍຕາມບ່ອນ
ບ້ານເມືອງເຮົາຊິອາດເອ້    ເຕັມເປື້ອນສິ່ງເສດເຫຼືອ ແທ້ໃດ!



## ໜັກຫາຍ ສະບາຍ

*(ເລື່ອງເບົາໆ ເວົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສຽມທ້ຽນ**

❊ **ຊົມ**ເຊີຍວັນຄ້າຍວັນເກີດປະທານ **ໄກສອນ ພົມວິຫານ** ທີ່ຈະໄດ້ໝູນວຽນມາບັນຈົບຄົບຮອບ **104 ປີ** ຄຸນຄວາມດີທ່ານສ້າງ ສານສືບເປັນຕຳນານ ປອງປະຊາຊົນລາວ ທົ່ວທານີແຄວ້ນ ເດີນໄຕ່ຕາມເທັນຮູ້ ບຸນຄຸນຍິ່ງໃຫຍ່ ປະທານສອນສັ່ງໄວ້ ໂລກາຮູ້ທົ່ວເຖິງ **ຊອບແລ້ວ!**

❊ **ການ**ສະເຫຼີມສະຫຼອງງານບຸນປະເພນີ ເພື່ອສົ່ງທ້າຍປີເກົ່າ ຕ້ອນຮັບປີໃໝ່ **(ບຸນກິນຈຽງ)** ຂອງພີ່ນ້ອງປະຊາຊົນລາວຊົນເຜົ່າຕ່າງໆ **ປະຈຳປີ 2025** ພອມທ້າງທາກະກຽມ ແລະ ດຳເນີນໄປດ້ວຍບັນຍາກາດ**ຄຶກຄື້ນມ່ວນຊື່ນ** ວັນເວລາຫຍັບຍ່າງຍ້າຍ ປີໃໝ່ໝູນວຽນມາ ຂໍອວຍພອນປະຊາ ທົ່ວທານີແຄວ້ນ ໃຫ້ແສນສຸກຊີລົ້ນ ຜົນງານໃຫ້ດີເດັ່ນ ເປັນກຳລັງແຮງປະກອບໃຫ້ ເມືອງບ້ານຈະເລີນກ້າວ **ຊອບແລ້ວ!**

## ຊອບຍິ້ມ

**# ແອ່ບຕຸ້ງ**

### ເລື່ອງ: ໃຫ້ເລືອກ

ມີຊາຍເສດຖີໄວໃກ້ກະສຽນຄົນໜຶ່ງ ນຶກຄຶ້ມອົກຄຶ້ມໃຈເຫັນສາວໄວໜຸ່ມ ຈຶ່ງເຂົ້າໄປຢອກໄຍ ວ່າ:

**ຊາຍເສດຖີ:** ຂ້ອຍສາມາດໃຫ້ເຈົ້າໄດ້ທຸກຢ່າງ ແຕ່ຂ້ອຍມີຄຳຖາມ ຖາມເຈົ້າກ່ອນ.

**ສາວໄວໜຸ່ມ:** ເຖົ້າອະນີ້... ຖາມມາ

**ຊາຍເສດຖີ:** ຖ້າຂ້ອຍໃຫ້ເຈົ້າເລືອກລະຫວ່າງເງິນກັບສະໝອງ ເຈົ້າຊິເລືອກຫຍັງ?

ສາວໄວໜຸ່ມຕອບດ້ວຍທ່າທີໃຈຮ້າຍວ່າ: **ສະໝອງ!!!!!!**

**ຊາຍເສດຖີ:** ວ່າລະ ເຈົ້າຕ້ອງເລືອກສິ່ງທີ່ເຈົ້າບໍ່ມີ....



## ຄະຕິເຕືອນໃຈ

**# ດອກຫຍ້າ**

ໃຈໃຫ້ເຢັນດັ່ງນ້ຳ    ອັງໃຫຍ່ພະສຸທາ
ໃຈໃຫ້ແຂງຄືຜາ    ເດັ່ນສູງທຽມຟ້າ
ຢ່າໃຫ້ອ່ອນແອເປ້ຍ    ຄືເຄືອໝາກບວບອ່ອນ
ຢ່າໃຫ້ມັນຮີບຮ້ອນ    ໃຫ້ຄ່ອຍແກ້ບັນເທົາ ທ່ານເອີຍ!

ລັດຖະສະພາຕ່າງປະເທດ

# ສະພາສາມັນອັງກິດ ຜ່ານຮ່າງ ກົດໝາຍຫ້າມເຍົາວະຊົນສູບຢາ

*ສະມາຊິກສະພາສາມັນ (House of Commons) ຫຼື ສະພາຕ່ຳຂອງອັງກິດ ມີມະຕິຮັບຮອງຮ່າງກົດໝາຍ ເຊິ່ງມີຈຸດປະສົງເພື່ອຢຸດເຊົາການສູບຢາ ໂດຍປ້ອງກັນບໍ່ໃຫ້ເຍົາວະຊົນສາມາດຊື້ຢາສູບໄດ້.*

(AFP)-ໃນການລົງຄະແນນສຽງຄັ້ງທຳອິດ ເມື່ອວັນທີ 27 ພະຈິກຜ່ານມາ, ສະມາຊິກສະພາ 415 ທ່ານ ໄດ້ອະນຸມັດຮ່າງກົດໝາຍວ່າດ້ວຍຢາສູບ ແລະ ຢາສູບໄຟຟ້າ ເຂົ້າສູ່ຂັ້ນຕອນຕໍ່ໄປຂອງຂະບວນການນິຕິບັນຍັດ ໂດຍມີພຽງ47ສຽງທີ່ບໍ່ເຫັນດີ; ຮ່າງກົດໝາຍດັ່ງກ່າວຈະປ້ອງກັນບໍ່ໃຫ້ຜູ້ທີ່ເກີດຫຼັງວັນທີ 01 ມັງກອນ 2009 ສູບຢາໄດ້ຢ່າງຖືກກົດໝາຍ ໂດຍທາງການຂອງອັງກິດ ຈະຄ່ອຍໆເພີ່ມອາຍຸຂັ້ນຕ່ຳທີ່ສາມາດຊື້ຢາສູບໄດ້ ເຊິ່ງລັດຖະບານລອນດອນກ່າວວ່າ ມີເປົ້າໝາຍເພື່ອສ້າງ "ຄົນຮຸ່ນປອດຢາສູບ" ກຸ່ມທຳອິດຂອງປະເທດ.

ຂໍ້ສະເໜີຂ້າງເທິງແມ່ນຄ້າຍຄືກັນກັບຮ່າງກົດໝາຍທີ່ສະເໜີໂດຍລັດຖະບານພັກອະນຸລັກນິຍົມຊຸດກ່ອນໜ້າ ເຊິ່ງຖືກໂຈະໄວ້ໃນຕົ້ນປີນີ້ ເມື່ອທ່ານ ຣິຊີ ຊູແນັກ (Rishi Sunak) ນາຍົກລັດຖະມົນຕີອັງກິດໃນເວລານັ້ນ ຮຽກຮ້ອງໃຫ້ມີການເລືອກຕັ້ງທົ່ວໄປກ່ອນກຳນົດ; ຢ່າງໃດກໍຕາມ, ທ່ານ ເຄຍ ສະຕາເມີ (KeirStarmer)ນາຍົກລັດຖະມົນຕີຄົນປັດຈຸບັນ ແລະ ຜູ້ນຳລັດຖະບານພັກແຮງງານຊຸດໃໝ່ ນຳຂໍ້ສະເໜີດັ່ງກ່າວກັບມາອີກຄັ້ງ ເປັນສ່ວນໜຶ່ງຂອງຄວາມພະຍາຍາມເພື່ອຍົກລະດັບມາດຕະການປ້ອງກັນດ້ານສຸຂະພາບແລະຫຼຸດຜ່ອນຄວາມກົດດັນໃນໄລຍະຍາວຕໍ່ສຳນັກງານບໍລິການສຸຂະພາບແຫ່ງຊາດ (National Health Service - NHS).




ຮ່າງກົດໝາຍສະບັບໃໝ່ຍັງຈະກຳນົດຂໍ້ຈຳກັດກ່ຽວກັບການໂຄສະນາແລະການສະໜັບສະໜູນຢາສູບໄຟຟ້າ ເຊັ່ນດຽວກັນກັບການຈຳກັດລົດຊາດ, ການນຳສະເໜີແລະການຫຸ້ມຫໍ່ຂອງຢາສູບໄຟຟ້າເພື່ອຫຼຸດຜ່ອນຄວາມດຶງດູດຕໍ່ເດັກ ແລະ ເຍົາວະຊົນ; ລັດຖະບານລອນດອນຍັງໄດ້ປະກາດວ່າ ຢາສູບໄຟຟ້າແບບໃຊ້ແລ້ວຖິ້ມ ຈະຖືກຫ້າມໃນປີໜ້າພາຍໃຕ້ກົດໝາຍແຍກຕ່າງຫາກ.

# UAE ອອກກົດໝາຍຂອງລັດຖະບານກາງ ເພື່ອສົ່ງເສີມຂະແໜງສິລະປະ

(Xinhua)-ວັນອາທິດທີ 24 ພະຈິກຜ່ານມາ, ສະຫະລັດ ອາຣັບ ເອມິເຣດ (United Arab Emirates - UAE) ໄດ້ອອກກົດໝາຍລະດັບລັດຖະບານກາງ ແນໃສ່ສົ່ງເສີມຂະແໜງສິລະປະຂອງປະເທດ; ກົດໝາຍດັ່ງກ່າວ ໄດ້ສ້າງຂອບການເຮັດວຽກທີ່ລະອຽດໃນການຄຸ້ມຄອງສະຖາບັນສິລະປະທີ່ບໍ່ຫວັງຜົນກຳໄລ ພ້ອມທັງໃຫ້ຜົນປະໂຫຍດອັນໃຫຍ່ຫຼວງສຳລັບອຸດສາຫະກຳສິລະປະ, ຜູ້ປະກອບອາຊີບ ແລະ ນັກສິລະປິນທີ່ມີຄວາມສາມາດ.

ກົດໝາຍດັ່ງກ່າວ ແນໃສ່ສົ່ງເສີມການສ້າງສັນສິລະປະ, ດຶງດູດຜູ້ທີ່ມີພອນສະຫວັນ ແລະ ສົ່ງເສີມເສດຖະກິດສ້າງສັນທີ່ຈະເລີນຮຸ່ງເຮືອງ ໂດຍການອຳນວຍຄວາມສະດວກໃຫ້ແກ່ການລິເລີ່ມເຊັ່ນ: ຫໍພິພິທະພັນເອກະຊົນ, ງານວາງສະແດງສິລະປະຊົ່ວຄາວ ແລະການສະແດງລະຄອນ ເພື່ອສະໜັບສະໜູນກິດຈະກຳທາງສິລະປະທີ່ເຂົ້າເຖິງຊຸມຊົນຢ່າງກວ້າງຂວາງ, ນອກຈາກນີ້ ຍັງສົ່ງເສີມຄຸນຄ່າຂອງຄວາມອົດທົນອົດກັ້ນ ແລະ ການຢູ່ຮ່ວມກັນຜ່ານຄວາມຄິດສ້າງສັນ.

ນິຕິກຳຂອງລັດຖະບານກາງສະບັບນີ້ ອະນຸຍາດໃຫ້ອຳນາດການປົກຄອງທ້ອງຖິ່ນ ສາມາດສະໜອງສິ່ງຈູງໃຈຕ່າງໆ ລວມເຖິງການຍົກເວັ້ນພາສີແລະອາກອນສຳລັບສະຖາບັນສິລະປະ ແລະ ການສະສົມ ໂດຍຕ້ອງປະຕິບັດຕາມຂໍ້ກຳນົດທາງກົດໝາຍ; ສະຖາບັນສິລະປະ ສາມາດຮັບການສະໜັບສະໜູນດ້ານການເງິນໂດຍຜ່ານເງິນບໍລິຈາກ,ເງິນຊ່ວຍເຫຼືອລ້າ ແລະ ເງິນສະໜັບສະໜູນ ໃນຂະນະທີ່ໄດ້ຮັບຜົນປະໂຫຍດຈາກຂັ້ນຕອນການອອກໃບອະນຸຍາດທີ່ງ່າຍຂຶ້ນ ເຊິ່ງຢູ່ພາຍໃຕ້ການຄວບຄຸມໂດຍກະຊວງວັດທະນະທຳ ຫຼື ອົງການປົກຄອງທ້ອງຖິ່ນ.



ນອກຈາກນັ້ນ, ຍັງກຳນົດກິດຈະກຳສິລະປະທີ່ໄດ້ຮັບອະນຸຍາດ ລວມມີສິລະປະພາບ ແລະສຽງ, ສິລະປະການສະແດງ, ວັນນະຄະດີ, ດົນຕີ ແລະ ການສາຍຮູບເງົາ; ກົດໝາຍຍັງເນັ້ນໜັກເຖິງບົດບາດຂອງເຕັກໂນໂລຊີໃໝ່ ໃນການຂະຫຍາຍການເຂົ້າເຖິງການສະສົມ ແລະ ງານວາງສະແດງສິລະປະ.

ມີການນຳມາດຕະການປ້ອງກັນທີ່ເຂັ້ມງວດມາໃຊ້ ເພື່ອຮັບປະກັນວ່າກິດຈະກຳທາງສິລະປະຈະບໍ່ໃຫ້ເກີດຄວາມກຽດຊັງ ຫຼື ຂໍ້ຂັດແຍ້ງທາງນິກາຍ, ເຊື້ອຊາດ ແລະ ສາສະໜາ; ຄວາມພະຍາຍາມດ້ານສິລະປະທັງໝົດຕ້ອງໄດ້ຮັບໃບອະນຸຍາດຈາກອົງການທີ່ມີອຳນາດ ເພື່ອຮັບປະກັນວ່າປະຕິບັດຕາມກົດໝາຍ.

ຂໍ້ລິເລີ່ມນີ້ ສະທ້ອນໃຫ້ເຫັນເຖິງຄວາມມຸ່ງໝັ້ນຂອງ UAE ໃນການເສີມສ້າງຖານະຂອງຕົນເປັນສູນກາງດ້ານສິລະປະ ແລະ ວັດທະນະທຳລະດັບໂລກເຊິ່ງສອດຄ່ອງກັບວິໄສທັດທີ່ກວ້າງຂວາງຂອງການສົ່ງເສີມຄວາມຄິດສ້າງສັນ ແລະ ຄວາມເປັນເລີດດ້ານວັດທະນະທຳ.

ເຝົ້າໄວ້ ໄດ້ບໍດຽວ

# ໂທດຂອງການໃຊ້ ຄວາມຮຸນແຮງຕໍ່ແມ່ຍິງ

❖ ວິເສດ ສະແຫວງສຶກສາ

ວັນທີ 25 ພະຈິກຂອງແຕ່ລະປີ ແມ່ນວັນສາກົນຕ້ານການໃຊ້ຄວາມຮຸນແຮງຕໍ່ເພດຍິງ ເພື່ອລະນຶກເຖິງຄວາມສຳຄັນຂອງວັນດັ່ງກ່າວ, ຜູ້ຂຽນໄດ້ສັງລວມເອົາເລື່ອງຕ່າງໆ ທີ່ພົວພັນກັບການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ເພື່ອເບິ່ງນຳກັນວ່າຢູ່ບ້ານເພິ່ນເມືອງທ່ານນັ້ນ ເພິ່ນມີວິທີປ້ອງກັນເຫດຮ້າຍດັ່ງກ່າວແນວໃດ ແລະ ໂທດທີ່ວາງໃສ່ການກະທຳທີ່ວ່ານັ້ນໜັກເບົາປານໃດ.

ຕົວຢ່າງເລື່ອງທຳອິດນີ້ ເກັບມາຈາກຂ່າວສັ້ນ ໜັງສືພິມ ວຽງຈັນທາມ ປະຈຳວັນທີ 31 ພຶດສະພາ 2023 ກ່ຽວກັບຜູ້ເປັນຜົວຊື່ ອາດຳ ບຣາວ ອາຈານສອນຢູ່ມະຫາວິທະຍາໄລ ເດຍຄິນ, ນະຄອນເມວເບິນ ອົດສະຕຣາລີ ທີ່ໄດ້ໃຊ້ມີດແທງຜູ້ເປັນເມຍຊື່ ນາງ ເຈີນເຈິງເສຍຊີວິດຄາມື, ອາດຳບຣາວຜົວໃຈໂຫດຄົນນີ້ຖືກຕັດສິນຈຳຄຸກເປັນເວລາ24ປີ. ເລື່ອງທີ່ນຳໄປສູ່ເຫດຮ້າຍເຖິງແກ່ຊີວິດຂອງຝ່າຍເມຍ ກໍບໍ່ເປັນເລື່ອງທຳມະດາ ຄືເລື່ອງຜິດຖຽງກ່ຽວກັບແຜນສົ່ງລູກໄປໂຮງຝາກເດັກເທົ່ານັ້ນ. ຂ່າວບໍ່ໄດ້ບອກແຈ້ງວ່າກ່ຽວກັບເລື່ອງບ່ອນຝາກ ຫຼື ລາຄາຄ່າຝາກເດັກ, ບອກພຽງວ່າໄດ້ມີການຖົກຖຽງ ແລະ ໃຊ້ອາລົມຕໍ່ກັນຢ່າງຮຸນແຮງ ເຖິງຂັ້ນຝ່າຍຜົວໄດ້ລົງໄມ້ລົງມືປິດຊີວິດຂອງເມຍຢ່າງໄຮ້ຄວາມກູນາປານີ. ເຫດຮ້າຍນີ້ໄດ້ເກີດຂຶ້ນໃນເດືອນເມສາ 2022 ແຕ່ມີການຕັດສິນໂທດເດັດຂາດໃນເດືອນພຶດສະພາ 2023. ອາດຳ ເປັນອາຈານຄົນສຳຄັນຂອງມະຫາວິທະຍາໄລ ເດຍຄິນ ໃນວິຊາສື່ມວນຊົນ ແລະບົດບາດຍິງ-ຊາຍ. ຂ່າວມ້ວນທ້າຍ ອາດຳ ບຣາວ ມີບັນຫາທາງດ້ານຈິດໃຈແລະມີຄວາມຄຽດໜັກໃນມື້ເກີດເຫດ. ສະຫຼຸບລວມແລ້ວ ຄວາມຄຽດຄວາມຜິດປົກກະຕິຂອງຝ່າຍຊາຍ ມັກຈະນຳໄປສູ່ເຫດຮ້າຍສຳລັບແມ່ຍິງ ທີ່ເປັນເມຍເປັນລູກຢູ່ເລື້ອຍໆ.

ເລື່ອງຕໍ່ໄປເກີດຢູ່**ປະເທດ ຕັງຊາເນຍ ທີ່ທະວີບອາຟຣິກາ**, ເປັນເຫດການທີ່ສັ່ນສະເທືອນໄປທົ່ວປະເທດ ແລະ ລາມໄປສູ່ປະເທດອື່ນໆນຳ. ເລື່ອງມີຢູ່ວ່ານາງອາມີນາຣາຟາແອນ ນະບັນດາ (Amina Raphael Mbunda) ອາຍຸ 26 ປີ ແລະ ກຳລັງຖືພາແກ່ຖືກເຈົ້າໜ້າທີ່ຕຳຫຼວດຈັບກຸມຍ້ອນຜົວຂອງນາງຖືກຕ້ອງຫາວ່າໄດ້ຊື້ຕຽງທີ່ໂຈນລັກມາຂາຍຕໍ່. ເມື່ອຊອກຈັບຜູ້ເປັນຜົວບໍ່ໄດ້ ເຈົ້າໜ້າທີ່ເລີຍຈັບນາງ ອາມີນາ ແທນ ແລ້ວເອົາລາວໄປກັກຂັງໄວ້ບໍລິເວນເດີ່ນຫຍ້າ ຂ້າງຫ້ອງການຕຳຫຼວດ. ໃນຄະນະນັ້ນ ນາງ ອາມີນາ ເຈັບທ້ອງເກີດລູກ ຈຶ່ງໄດ້ຂໍຮ້ອງໃຫ້ເຈົ້າໜ້າທີ່ຊ່ວຍນຳຕົວໄປໂຮງໝໍ ແຕ່ກໍຖືກປະຕິເສດ ສຸດທ້າຍນາງກໍເລີຍເກີດລູກຢູ່ບ່ອນເດີ່ນຫຍ້າໂດຍລຳພັງຄືໝູຄືໝາ ໃນຕອນທ່ຽງຄືນວັນນັ້ນ. ເຫດການໃນຄັ້ງນີ້ ໄດ້ກາຍເປັນມັດໄຟທີ່ກໍ່ໃຫ້ເກີດກອງໄຟແຫ່ງຄວາມໂກດແຄ້ນໄປທົ່ວປະເທດ. ສັງຄົມຕັງຊາເນຍ ໄດ້ຕັ້ງຄຳຖາມຂຶ້ນວ່າ ເຫດໃດຈຶ່ງຈັບຄົນບໍລິສຸດແທນຄົນທີ່ຕ້ອງໄດ້ມີຄວາມຜິດ? ເຫດໃດຈຶ່ງປ່ອຍໃຫ້ນາງ ອາມີນາ ເກີດລູກໂດຍບໍ່ມີການຊ່ວຍເຫຼືອ ຖ້ານາງເສຍຊີວິດເດ? ຄຳວ່າ "ຈັ່ງແມ່ນຊາດຕຳຫຼວດໜ້າບໍ່ອາຍ" ນີ້ຄືຄຳດ່າວ່າສ່ວນໜຶ່ງຈາກຜູ້ປົກປ້ອງສິດທິຂອງແມ່ຍິງແລະເດັກນ້ອຍ. ນີ້ກໍແມ່ນອີກສາກໜຶ່ງຂອງຄວາມໄຮ້ມະນຸດສະທຳຕໍ່ແມ່ຍິງທີ່ຍັງມີຢູ່ທົ່ວໆໄປໃນໂລກໜ່ວຍນີ້.

ເລື່ອງສຸດທ້າຍແມ່ນກ່ຽວກັບຄວາມຮຸນແຮງທາງດ້ານຈິດໃຈ ທີ່ຜູ້ພິພາກສາລະດັບຊາດຄົນໜຶ່ງ ປ່ອຍອອກມາຈາກປາກໃສ່ແມ່ຍິງຄົນໜຶ່ງທີ່ຕົກເປັນເຫຍື່ອຂອງການຂົ່ມຂືນ. ເຫດການນີ້ເກີດຂຶ້ນຢູ່**ປະເທດ ການາດາ** (ຂ່າວສັ້ນໆໜັງສືພິມ The Nation ວັນທີ 11 ມີນາ 2017) ຜູ້ພິພາກສາທີ່ເວົ້າກ່ອນຈຶ່ງຄິດນຳຫຼັງຄົນນີ້ຊື່ວ່າ ໂລບິນແຄມ. ໃນມື້ທີ່ເຂົາເຮັດໜ້າທີ່ສອບສວນຄະດີຂົ່ມຂືນນັ້ນ, ເຂົາໄດ້ປ່ອຍຄຳເວົ້າແບບບໍ່ຮັບຜິດຊອບໃສ່ແມ່ຍິງອາຍຸ 19 ປີ ທີ່ຖືກຂົ່ມຂືນວ່າ "ແນ່ນອນລະ... ຄວາມເຈັບປວດ ແລະ ຄວາມສຸກຂອງເພດ ຍ່ອມໄປນຳກັນສະເໝີ..." ແລ້ວເຂົາກໍຍັງຖາມແມ່ຍິງທີ່ຕົກເປັນເຫຍື່ອອີກວ່າ "ເວລາເຂົາຂົ່ມຂືນເຈົ້າຫັ້ນ... ເປັນຫຍັງເຈົ້າຈຶ່ງບໍ່ໜີບຂາໄວ້ແໜ້ນໆ?" ຈາກຄຳເວົ້າບໍ່ພໍເທົ່າໃດແຖວນີ້ ເຂົາກໍຖືກສັ່ງປົດທັນທີ ແລະ ເຂົາກໍຕ້ອງໄດ້ກົ້ມໜ້າເຊັດນ້ຳຕາອອກຈາກຕຳແໜ່ງອັນຊົງກຽດ ພ້ອມທັງອອກປາກຂໍໂທດຂໍໂພຍຕໍ່ສັງຄົມຈົນນ້ຳລາຍແຫ້ງ.

## ບາງບັນຫາ...

(ຕໍ່ຈາກໜ້າ 2)

ບ້ານທົ່ວປະເທດ; ສຳນັກງານ, ອົງການຈັດຕັ້ງພັກ-ລັດ, ບັນດາຂະແໜງການ, ກົມກອງກຳລັງປະກອບອາວຸດ ສູ້ຊົນສ້າງເປັນສຳນັກງານ, ອົງການປອດຢາເສບຕິດ ໃຫ້ໄດ້ 100%; ໂຮງຮຽນ, ສະຖາບັນການສຶກສາສູ້ຊົນສ້າງເປັນຫົວໜ່ວຍປອດຢາເສບຕິດໃຫ້ໄດ້ 95% ຂຶ້ນໄປ. 2. ການນຳເອົາຄຳຄິດ, ຄຳເຫັນ, ຄຳສະເໜີຂອງປະຊາຊົນບັນດາເຜົ່າທີ່ສະເໜີຜ່ານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ສາຍດ່ວນ ຍັງບໍ່ທັນໄດ້ຮັບການອະທິບາຍ, ຊີ້ແຈງ ແລະ ມີຄຳຕອບໃຫ້ແກ່ປະຊາຊົນຢ່າງເປັນລະບົບ. 3. ການຕິດຕາມກວດກາຂອງສູນກາງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ໃນໄລຍະຜ່ານມາເຫັນວ່າສະພາແຫ່ງຊາດ ມີການເຄື່ອນໄຫວວຽກງານຂອງຕົນຕາມພາລະບົດບາດໄດ້ດີພໍສົມຄວນ, ຂໍໃຫ້ສືບຕໍ່ປະຕິບັດສິດ ແລະ ໜ້າທີ່ຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ໂດຍສະເພາະພາລະບົດບາດທີ່ກຳນົດໄວ້ໃນມາດຕາ 12 ຂໍ້ 1.6.

